# ຍິນດີຕ້ອນຮັບ

## ມາສູ່ Washington Apple Health

ການປິ່ນປົວທີ່ຖືກຄວບຄຸມນຳ



Washington State Health Care Authority

[English] Language assistance services, including interpreters and translation of printed materials, are available free of charge. Call 1-800-562-3022 (TRS: 711).

[Amharic] የቋንቋ እገዛ አገልግሎት፣ አስተርጓሚ እና የሰነዶችን ትርጉም ጨምሮ በነጻ ይገኛል፡፡ 1-800-562-3022 (TRS: 711) ይደውሉ፡፡

[Arabic] خدمات المساعدة في اللغات، بما في ذلك المترجمين الفوريين وترجمة المواد المطبوعة، متوفرة مجاناً، اتصل على رقم 1-800-562-3022 (TRS: 711).

[Burmese] ဘာသာပြန်ဆိုသူများနှင့် ထုတ်ပြန်ထားသည့် စာရွက်စာတမ်းများဘာသာပြန်ခြင်းအပါအဝင် ဘာသာစကားအထောက်အကူဝန်ဆောင်မှုများကို အခမဲ့ရနိုင်ပါသည်။ 1-800-562-3022 (TRS: 711) ကိုဖုန်းခေါ်ဆိုပါ။

[Cambodian] សេវាជំនួយភាសា រួមមានទាំងអ្នកបកប្រែផ្ទាល់មាត់ និងការបកប្រែឯកសារបោះពុម្ព គឺអាចរកបានដោយឥតគិតថ្លៃ។ ហៅទូរស័ព្ទទៅលេខ 1-800-562-3022 (TRS: 711)។

[Chinese] 免费提供语言协助服务，包括口译员和印制资料翻译。请致电 1-800-562-3022 (TRS: 711)。

[Farsi (Persian)] خدمات کمک زبانی، از جمله مترجم شفاهی و ترجمه اسناد و مدارک (مطالب) چاپی، بصورت رایگان ارائه خواهد شد.با شماره 1-800-562-3022 (TRS: 711) تماس بگیرید.

[French] Des services d’aide linguistique, dont des interprètes et la traduction des documents, sont disponibles gratuitement. Appelez le 1-800-562-3022 (TRS : 711).

[Korean] 통역 서비스와 인쇄 자료 번역을 포함한 언어 지원 서비스를 무료로 이용하실 수 있습니다. 1-800-562-3022 (TRS: 711)번으로 전화하십시오.

[Laotian] ການບໍລິການດ້ານພາສາ, ລວມທັງນາຍແປພາສາ ແລະ ການແປເອກສານທີ່ພິມ, ມີໄວ້ໃຫ້ຟຣີໂດຍບໍ່ຄິດຄ່າ. ໂທຫາເລກ 1-800-562-3022 (TRS: 711).

[Pashto] په انګليسي ژبه باندې دپوهيدلو، په شمول د ژباړونکي او د چاپ شوي موادو ژباړه کولو د مرستي خدمتونه، پرته له تاديې په وړيا توګه شتون لري. دې خدمت ته لاسرسي موندلو لپاره دې شمېرې 1-800-562-3022 ته زنګ ووهئ (د اوريدلو يا خبرو کولو معلوليت لرونکې خلکو د زنګ وهلو شمېره (TRS): 711)

[Portuguese] Serviços de assistência linguística, incluindo interpretação e tradução de versões impressas, estão disponíveis gratuitamente. Ligue para 1-800-562-3022 (TRS: 711).

[Punjabi] ਭਾਸ਼ਾ ਸਹਾਇਤਾ ਸੇਵਾਵਾਂ—ਦੁਭਾਸ਼ੀਏ ਅਤੇ ਪ੍ਰਿੰਟ ਕੀਤੀ ਹੋਈ ਸਮੱਗਰੀ ਦੇ ਅੰਨੁਵਾਦ ਸਮੇਤ—ਮੁਫ਼ਤ ਉਪਲੱਬਧ ਹਨ। 1-800-562-3022 (TRS: 711) 'ਤੇ ਕਾਲ ਕਰੋ।

[Russian] Языковая поддержка, в том числе услуги переводчиков и перевод печатных материалов, доступна бесплатно. Позвоните по номеру 1-800-562-3022 (TRS: 711).

[Somali] Adeego caawimaad luuqada ah, ay ku jirto turjubaano afka ah iyo turjumid lagu sameeyo waraaqaha la daabaco, ayaa lagu helayaa lacag la’aan. Wac 1-800-562-3022 (TRS: 711).

[Spanish] Hay servicios de asistencia con idiomas, incluyendo intérpretes y traducción de materiales impresos, disponibles sin costo. Llame al 1-800-562-3022 (TRS: 711).

[Tagalog] Mga serbisyong tulong sa wika, kabilang ang mga tagapagsalin at pagsasalin ng nakalimbag na mga kagamitan, ay magagamit ng walang bayad. Tumawag sa 1-800-562-3022 (TRS: 711).

[Tigrigna] ተርጎምትን ናይ ዝተፅሓፉ ማተርያላት ትርጉምን ሓዊሱ ናይ ቋንቋ ሓገዝ ግልጋሎት፤ ብዘይ ምንም ክፍሊት ይርከቡ፡፡ ብ 1-800-562-3022 (TRS: 711) ደውሉ፡፡

[Ukrainian] Мовна підтримка, у тому числі послуги перекладачів та переклад друкованих матеріалів, доступна безкоштовно. Зателефонуйте за номером 1-800-562-3022 (TRS: 711).

[Vietnamese] Các dịch vụ trợ giúp ngôn ngữ, bao gồm thông dịch viên và bản dịch tài liệu in, hiện có miễn phí. Gọi 1-800-562-3022 (TRS: 711).

HCA ໄດ້ມຸ່ງໝັ້ນຕໍ່ການເອົາການເຂົ້າເຖິງການບໍລິການຂອງພວກເຮົາທີ່ເທົ່າທຽມກັນໃຫ້. ຖ້າຫາກວ່າທ່ານຕ້ອງການການອຳນວຍຄວາມສະດວກ, ຫລື ຕ້ອງການເອກສານໃນແບບຮູບຮ່າງ ຫລື ພາສາອື່ນໆ, ກະຣຸນາໂທຫາເລກ 1-800-562-3022 (TRS: 711).

Washington Apple Health

## ສາລະບານ


ຍິນດີຕ້ອນຮັບມາສູ່ Washington Apple Health [4]

ການບໍລິການຂອງ Apple Health [4]

ບັດ Services card ຂອງທ່ານ [5]

ແຜນທີ່ແລະຕາຕະລາງຂອງເຂດການບໍລິການປິ່ນປົວທີ່ຖືກຄວບຄຸມນຳ [7-8]

ການປິ່ນປົວສຸຂະພາບ (ການປະຖົມພະຍາບານ) [9]

ການປິ່ນປົວສຸຂະພາບການປະພຶດ [10]

ລາຍລະອຽດສຳລັບຄົນອະເມຣິກັນອິນດຽນ ແລະ ຄົນ ອາລາສກາດັ້ງເດີມ [12]

Apple Health Expansion [13]

ຜູ້ໃຫ້ຄວາມຊ່ວຍເຫລືອສຸຂະພາບກ ານປະພຶດ [14]

ການບໍລິການທີ່ທ່ານອາດຈະຕ້ອງການທີ່ຈະເຂົ້າເຖິງການ ປິ່ນປົວສຸຂະພາບ [15]

ສິດທິແລະຄວາມຮັບຜິດຊອບຂອງທ່ານ [17]

ຕິດຕໍ່ຫາພວກເຮົາ/ແຫລ່ງຊ່ວຍເຫລືອ [18]


### ການປະຕິເສດຄວາມຮັບຜິດຊອບກ່ຽວກັບປຶ້ມຄູ່ມືຫົວນີ້

ປຶ້ມຄູ່ມືຫົວນີ້ຈະນຳແນະນຳສະເປີໃຫ້ທ່ານໃຫ້ຮູ້ຈັກສະວັດດີ ການຂອງທ່ານ ແລະ ອະທິບາຍສິດທິ ແລະ ຄວາມຮັບຜິດຊອບຂອງທ່ານ, ຈະເຂົ້າຫາການບໍລິການໄດ້ແນວໃດ, ແລະ ຈະຮຽນໂຄງການປິ່ນສຸຂະພາບໄດ້ແນວໃດ. ກະລຸນາຮັບຮູ້ໄວ້ວ່າປຶ້ມຄູ່ມືຫົວນີ້ບໍ່ໄດ້ກໍ່ຕັ້ງສິດທິ ຫລື ສິດທິຕ້ອງໄດ້ຮັບທາງກົດໝາຍແນວໃດແນວນຶ່ງ. ທ່ານບໍ່ຄວນຈະອີງຕາມປຶ້ມຄູ່ມືຫົວນີ້ໃຫ້ເປັນແຫລ່ງລາຍລະອຽດແຫລ່ງດຽວເທົ່ານັ້ນກ່ຽວກັບ Apple Health (Medicaid). ທ່ານສາມາດໄດ້ຮັບລາຍລະອຽດຄົບຖ້ວນກ່ຽວກັບ Apple Health ໂດຍການເບິ່ງຢູ່ໃນແວບໄຊທ໌ຂອງ Health Care Authority ຢູ່ໜ້າ *Laws and Rules*, **hca.wa.gov/about-hca/rulemaking**.

# ຍິນດີຕ້ອນຮັບມາສູ່ Washington Apple Health

ທ່ານໄດ້ຮັບປຶ້ມຄູ່ມືຫົວນີ້ຍ້ອນວ່າທ່ານໄດ້ຈົດຊື່ເຂົ້າໃນຫມໍ່ໆມານີ້ນຳໂຄງການ Washington Apple Health. Washington State Health Care Authority (HCA) ປົກຄອງບໍລິຫານໂຄງການ Apple Health (Medicaid) ແລະ ເຮັດສັນຍານຳໂຄງການປິ່ນປົວສຸຂະພາບທີ່ຖືກຄວບຄຸມນຳໃຫ້ເອົາການຄຸ້ມກັນຂອງທ່ານໃຫ້. ຕໍ່ໄປພາຍຫລັງທ່ານຈະໄດ້ຮັບປຶ້ມ "Your Benefits Handbook" ຈາກໂຄງການປິ່ນປົວສຸຂະພາບຂອງທ່ານ. ມັນຈະໃຫ້ຮາຍຣະອຽດເພີ້ມເຕີມອີກກ່ຽວກັບສະວັດດີການທີ່ຖືກຄຸ້ມກັນຂອງທ່ານ.



## ການບໍຣິການຂອງ Apple Health ຈາກໂຄງການຂອງທ່ານ

ໂຄງການປິ່ນປົວສຸຂະພາບທີ່ຖືກຄວບຄຸມນຳຂອງທ່ານຄຸ້ມກັນການບໍຣິການປິ່ນປົວຕໍ່ລົງໄປນີ້:

- ຫມາຍນັດພົບນຳທ່ານຫມໍ ຫລື ຜູ້ຊ່ຽວຊານການປິ່ນປົວສຸຂະພາບສຳລັບການປິ່ນປົວຈຳເປັນລວມທັງການບໍຣິການປິ່ນປົວປ້ອງກັນ ແລະ ການບໍຣິການສຸຂະພາບແຂງແຮງ ແລະ ການກຳກັບຄວບຄຸມນຳພະຍາດຊຳເຮື້ອ
- ການປິ່ນປົວພະຍາບານໃນເຫດການສຸກເສີນ
- ການປິ່ນປົວແມ່ ແລະ ເດັກເກີດໃຫມ່
- ການປິ່ນປົວເດັກນ້ອຍ, ລວມທັງການປິ່ນປົວທາງປາກ ແລະ ສາຍຕາ
- ການບໍຣິການຂອງຫ້ອງວິຈັຍ
- ຢາສັ່ງຊື້ຈາກທ່ານຫມໍ
- ການນອນໂຮງພະຍາບານ
- ການບໍຣິການບໍ່ນອນໂຮງພະຍາບານ
- ການບໍຣິການປິ່ນປົວໃຫ້ດີຄືນຄືເກົ່າ ຫລື ໃຫ້ດີຄືນ* ແລະ ເຄື່ອງອຸບປະກອນ
- ການບໍຣິການດ້ານສຸຂະພາບໂຣກຈິດ
- ການປິ່ນປົວການໃຊ້ຢາເສບຕິດ

*ຕິດຕໍ່ຫາໂຄງການປິ່ນປົວສຸຂະພາບຂອງທ່ານເພື່ອຈະເບິ່ງວ່າທ່ານມີເງື່ອນໄຂໄດ້ຮັບ ຫລື ບໍ່

*ຫມາຍເຫດ: ລາຍຊື່ອານນີ້ແມ່ນຣາຍຣະອອດທົ່ວໄປເທົ່ານັ້ນແລະບໍ່ຮັບປະກັນວ່າຈະຄຸ້ມກັນການບໍຣິການ Apple Health ທຸກໆຢ່າງເຫລົ່ານີ້.*

### ຕິດຕໍ່ຫາເລກໂທຜະແນກຊ່ວຍເຫລືອສະມາຊິກຂອງໂຄງການປິ່ນປົວສຸຂະພາບຂອງທ່ານເມື່ອເວລາທ່ານ (ຫລື ລູກຂອງທ່ານ):

- ມີບັນຫາ ຫລື ຄວາມຂ້ອງໃຈນຳໂຄງການປິ່ນປົວສຸຂະພາບຂອງທ່ານ.
- ຕ້ອງການຊອກຫາຜູ້ໃຫ້ການປິ່ນປົວປະຖົມພະຍາບານ.
- ຕ້ອງການຢາກຈະປ່ຽນຜູ້ໃຫ້ການປະຖົມພະຍາບານ (PCP) ຂອງທ່ານ.
- ເຮັດບັດ ID ຂອງໂຄງການປິ່ນປົວສຸຂະພາບຂອງທ່ານເສັຽໄປ ແລະ ຢາກຈະໄດ້ໃບໃຫມ່.
- ມີຄວາມຕ້ອງການປິ່ນປົວສຸຂະພາບພິເສດ
- ຕ້ອງການການເຂົ້າເຖິງການປິ່ນປົວສຸຂະພາບໂຣກຈິດ.
- ຕ້ອງການການເຂົ້າເຖິງການປິ່ນປົວຢາເສບຕິດ.

# ບັດ **Services card** ຂອງທ່ານ

ທ່ານຈະໄດ້ຮັບບັດສອງໃບທາງໄປສະນີ, ບັດໃບນຶ່ງຈາກ Washington Apple Health (services card) ແລະບັດອີກໃບນຶ່ງຈາກ ໂຄງການປິ່ນປົວສຸຂະພາບຂອງທ່ານຊຶ່ງຈະກຳກັບຄວບຄຸມການປິ່ນປົວຂອງທ່ານ.



ປະມານສອງອາທິດຫລັງຈາກທີ່ທ່ານໄດ້ຈົດຊື່ເຂົ້າໃນ Washington Apple Healthໂດຍຜ່ານ Washington Healthplanfinder **wahealthplanfinder.org** Washington Connection **washingtonconnection.org** ທ່ານຈະໄດ້ຮັບບັດບໍລິການ services card ສີຟ້າ(ຍັງຖືກເອີ້ນອີກວ່າແມ່ນບັດ ProviderOne) ຄືກັນກັບຢູ່ໃນຮູບຢູ່ທີ່ນີ້. ເກັບຮັກສາບັດໃບນີ້ໄວ້. ບັດບໍລິການ services card ຂອງທ່ານສະແດງໃຫ້ເຫັນວ່າທ່ານໄດ້ຈົດຊື່ເຂົ້າໃນ Apple Health ແລ້ວ.

ບັດບໍລິການຂອງທ່ານຈະລວມເອົາ:

- ເລກ ProviderOne
- ວັນທີຖືກເຮັດອອກໃຫ
- ແວບໄຊທ໌ ProviderOn
- ລາຍລະອຽດການຕິດຕໍ່ຫາຜະແນກປະຊາສຳພັນ

ທ່ານບໍ່ຕ້ອງໄດ້ເຮັດໃຫ້ບັດບໍລິການ services card ໃບໃຫມ່ຂອງທ່ານໃຊ້ການໄດ້. HCA ຈະເຮັດໃຫ້ບັດຂອງທ່ານໃຊ້ການໄດ້ກ່ອນທີ່ພວກເຮົາຈະສົ່ງອອກໄປໃຫ້ທ່ານ. ແຕ່ລະຄົນຈະມີເລກລູກຄ້າ ProviderOne ແຕກຕ່າງກັນ ທີ່ຈະຢູ່ນຳເຂົາເຈົ້າຕະລອດຊີວິດ.

## ຖ້າຫາກວ່າທ່ານບໍ່ໄດ້ຮັບບັດ **services card** ຂອງທ່ານ ຫລື ທ່ານເຮັດເສັຽໄປ

ຖ້າຫາກວ່າທ່ານບໍ່ໄດ້ຮັບບັດບໍລິການ services card ຂອງທ່ານກ່ອນທ້າຍຂອງສອງອາທິດຫລັງຈາກການຈົດຊື່ເຂົ້າໃນ Apple Health ຂອງທ່ານຢ່າງເປັນຜົນສຳເຣັດ, ຫລື ຖ້າຫາກວ່າທ່ານເຮັດບັດຂອງທ່ານເສັຽໄປ, ທ່ານສາມາດຮ້ອງຂໍເອົາບັດໃບໃຫມ່ແທນໄດ້:

- **WAPlanfinder ແອບ :** ຖ້າຫາກວ່າທ່ານມີບັນຊີ,Washington Healthplanfinder, ທ່ານສາມາດເຂົ້າຫາບັດບໍລິການດິຈິຕອນຂອງທ່ານໄດ້ຢູ່ໃນ WAPlanfinder ແອບ໌, ມີໄວ້ໃຫ້ຢູ່ຕາມ Apple App ຫລື Google Play.
    - **ປ່ອງເຂົ້າຫາຂອງລູກຄ້າທາງອອນລາຍນ໌:**ປ່ອງເຂົ້າຫາຂອງລູກຄ້າທາງອອນລາຍນ໌: **https://www.waproviderone.org/client**
    - **ໂທຣະສັບ:**ໂທຣະສັບ: 1-800-562-3022 (ເລກໂທຟຣ) ແລະ ເລືອກເອົາທາງເລືອກ 1 ສຳລັບການບໍຣິການບໍຣິການ.ແລ້ວທາງເລືອກ 1 ສຳລັບບັດ ບໍຣິການ.

## ໂຄງການປິ່ນປົວສຸຂະພາບຂອງທ່ານ

ທ່ານຈະໄດ້ຮັບຫນັງສືບອກທ່ານກ່ຽວກັບຊື່ຂອງໂຄງການປິ່ນປົວສຸຂະພາບຂອງທ່ານ. ທ່ານມີສິດທິທີ່ຈະຮ້ອງຂໍໃຫ້ປ່ຽນໂຄງການປິ່ນປົວສຸຂະພາບຂອງທ່ານໄດ້ໃນທຸກໆເວລາ. ເພື່ອຣາຍລະອຽດເພີ້ມເຕີມກ່ຽວກັບວ່າຈະປ່ຽນໂຄງການໄດ້ຢ່າງໃດຈົ່ງເບິ່ງ "ການປ່ຽນໂຄງການປິ່ນປົວສຸຂະພາບ { ຢູ່ຫນ້າ 6.

**ຖ້າຫາກວ່າສະພາບການຕໍ່ລົງໄປນີ້ຢ່າງນຶ່ງ ຫລື ຫລາຍຢ່າງກ່ຽວຂ້ອງນຳທ່ານ, ຈົ່ງໂທຫາພວກເຮົາໂດຍທັນທີໂລດໄດ້ທີ່ 1-800-562-3022 (TRS: 711).**

- **ທ່ານກາຍເປັນມີເງື່ອນໄຂໄດ້ຮັບ** Medicare ຫລື ປະກັນພັຍເອກຊົນ.
- **ທ່ານເປັນຄົນອະເມຣິກັນອິນດຽນ ຫລື ຄົນອາລາສກາດັ້ງເດີມ** ທ່ານສາມາດພິຈາຣະນາເບິ່ງທາງເລືອກແນວອື່ນນອກຈາກການຄຸ້ມກັນຜ່ານໂຄງການປິ່ນປົວທີ່ຖືກຄວບຄຸມນຳ.
- **ທ່ານໄດ້ຈົດຊື່ເຂົ້າ ຫລື ເລືອກທີ່ຈະຈົດຊື່ເຂົ້າ** ໃນໂຄງການ Washington's Program of All-Inclusive Care for the Elderly (PACE) ຂອງຣັດວໍຊິງຕັນ.
- **ທ່ານມີສະພາບພະຍາບານທີ່ພິສູດໄດ້**, ແລະ ການປ່ຽນທ່ານຫມໍ ຫລື ໂຄງການປິ່ນປົວສຸຂະພາບຈະກະທົບກະເທືອນເຖິງການປິ່ນປົວຂອງທ່ານ ແລະ ເຮັດໃຫ້ສຸຂະພາບຂອງທ່ານຕົກຢູ່ໃນການສ່ຽງອັນຕະຣາຍ.

## ໂຄງການປິ່ນປົວສຸຂະພາບຂອງທ່ານ **card**



| ບ່ອນຕິດຕໍ່ຫາຂອງໂຄງການປິ່ນປົວທີ່ຖືກຄວບຄຸມນຳ | ເລກໂທຂອງສູນກາງ | ແວບໄຊທ໌ |
|---|---|---|
| Community Health Plan of Washington (CHPW) | 1-800-440-1561 | **chpw.org** |
| Coordinated Care (CC) | 1-877-644-4613 | **coordinatedcarehealth.com** |
| Molina Healthcare of Washington (MHW) | 1-800-869-7165 | **molinahealthcare.com** |
| UnitedHealthcare Community Plan (UHC) | 1-877-542-8997 | **uhccommunityplan.com** |
| Wellpoint Washington (WLP) | 1-833-731-2167 | **wellpoint.com/wa/medicaid** |

**ຫມາຍເຫດ:**ບໍ່ແມ່ນວ່າທຸກໆໂຄງການຈະມີໄວ້ໃຫ້ຢູ່ໃນທຸກໆຄາວຕີ້ຫລືໂຄງການ.

## ProviderOne

ທ່ານຈະເຫັນ “ProviderOne” ຢູ່ໃນບັດ services card ຂອງທ່ານ. ProviderOne ແມ່ນລະບົບຂ່າວລາຍລະອຽດທີ່ປະສານງານໂຄງການປິ່ນປົວສຸຂະພາບໃຫ້ພວກເຮົາ ແລະ ຊ່ວຍພວກເຮົາສົ່ງລາຍລະອຽດໄປໃຫ້ທ່ານໃນຫລາຍໆເວລາ. ເລກຢູ່ໃນບັດຂອງທ່ານແມ່ນເລກລູກຄ້າ ProviderOne ຂອງທ່ານ, (ເລກເກົ້າຕົວຈົບລົງຢູ່ໃນຣັດ WA). ທ່ານສາມາດເບິ່ງທາງອອນລາຍນ໌ເພື່ອຈະກວດເບິ່ງວ່າການຈົດຊື່ຂອງທ່ານໄດ້ເລີ້ມຕົ້ນແລ້ວ ຫລື ປ່ຽນໂຄງການປິ່ນປົວສຸຂະພາບຂອງທ່ານທາງເຂົ້າຂອງລູກຄ້າ ProviderOne ໄດ້ທີ່ **https://www.waproviderone.org/client**. ຜູ້ໃຫ້ການປິ່ນປົວສຸຂະພາບຍັງສາມາດໃຊ້ ProviderOne ເພື່ອຈະເບິ່ງວ່າຄົນເຈັບຂອງເຂົາເຈົ້າໄດ້ຈົດຊື່ເຂົ້ານຳ Apple Health ຫລື ບໍ່.

ສະມາຊິກແຕ່ລະຄົນຂອງຄອບຄົວຂອງທ່ານຜູ້ທີ່ມີເງື່ອນໄຂໄດ້ຮັບ Apple Health ຈະໄດ້ຮັບບັດ services card ຂອງເຂົາເຈົ້າເອງ. ແຕ່ລະຄົນມີເລກລູກຄ້າ ProviderOne ແຕກຕ່າງກັນຊຶ່ງຈະຢູ່ນຳເຂົາເຈົ້າໄປຕະລອດຊີວິດຂອງເຂົາເຈົ້າ.

ຖ້າຫາກວ່າທ່ານມີການຄຸ້ມກັນ Apple Health ມາແຕ່ກ່ອນທ່ານຈະບໍ່ໄດ້ຮັບບັດໃບໃຫມ່. ບັດໃບເກົ່າຂອງທ່ານຍັງມີຄຸນຄ່າໃຊ້ໄດ້ຢູ່, ເຖິງແມ່ນວ່າມັນຈະມີຊ່ວງວ່າງຂາດຕອນໃນການຄຸ້ມກັນກໍຕາມ. ເລກລູກຄ້າ ProviderOne ຂອງທ່ານຍັງຢູ່ຄືເກົ່າເຫມືອນເດີມ.

## ບັດໂຄງການປິ່ນປົວສຸຂະພາບຂອງທ່ານ

ບໍ່ພໍເທົ່າໃດອາທິດຫລັງຈາກທີ່ທ່ານຈົດຊື່ເຂົ້າໃນ Apple Health, ທ່ານຈະໄດ້ຮັບບັດ ID ໂຄງການປິ່ນປົວສຸຂະພາບພ້ອມທັງລາຍລະອຽດເພີ້ມເຕີມອີກຄືກັນຈາກໂຄງການຂອງທ່ານກ່ຽວກັບວ່າຈະເລືອກເອົາທ່ານຫມໍ ຫລື ຜູ້ໃຫ້ການປະຖົມພະຍາບານ (PCP) ຄົນນຶ່ງໄດ້ແນວໃດ. ເກັບຮັກສາບັດໃບນີ້ໄວ້, ອີກຄືກັນ! ຖືເອົາທັງບັດບໍຣິການ services card ແລະ ບັດຂອງໂຄງການປິ່ນປົວສຸຂະພາບຂອງທ່ານໄປນຳເມື່ອເວລາທ່ານໄປຫາທ່ານຫມໍ, ຮ້ານຂາຍຢາ, ຫລື ຜູ້ໃຫ້ການປິ່ນປົວສຸຂະພາບຄົນອື່ນ. ທ່ານຍັງຈະຕ້ອງການບັດ ID ມີຮູບອີກຄືກັນ.

## ການປ່ຽນໂຄງການປິ່ນປົວສຸຂະພາບ

ທ່ານມີສິດທີ່ຈະຮ້ອງຂໍໃຫ້ປ່ຽນໂຄງການປິ່ນປົວສຸຂະພາບຂອງທ່ານໄດ້ໃນທຸກໆເວລາ. ຂຶ້ນນຳເວລາທີ່ທ່ານເຮັດການຮ້ອງຂໍຂອງທ່ານ, ໂຄງການໃຫມ່ຂອງທ່ານຈະເລີ້ມຕົ້ນໂດຍທົ່ວໄປແລ້ວໃນວັນທຳອິດຂອງເດືອນຕໍ່ມາ. ມັນມີຫລາຍໆທົນທາງທີ່ຈະປ່ຽນໂຄງການຂອງທ່ານ:

- ລູກຄ້າຂອງ Apple ທີ່ມີບັນຊ Washington Healthplanfinder ສາມາດປ່ຽນໂຄງການໄດ້ໃນທຸກໆເວລາທາງອອນລາຍນ໌ຢູ່ທີ່ **wahealthplanfinder.org**.
- ສຳລັບລູກຄ້າຂອງ Apple Health ທຸກໆຄົນ,ແວ່ອເຂົ້າປັຽມແວບໄຊທຣ໌ຂອງ ProviderOne Client Portal ໄດ້ທີ່ **www.waproviderone.org/client**.
- ຮ້ອງຂໍເອົາການປ່ຽນແປງທາງອອນລາຍນ໌ໄດ້ທີ່ **https://fortress.wa.gov/hca/p1contactus/** ເລືອກເອົາ “Client” ແລະ ເລືອກເອົາຫົວເຣື່ອງ “Enroll/Change Health Plans”
- ໂທຫາພະແນກປະຊາສັມພັນຂອງ Apple Health ໄດ້ທີ່ເລກ 1-800-562-3022. ລະບົບອັດຕະໂນມັດຂອງພວກເຮົາຈະມີໄວ້ຮັບໃຊ້ຕະລອດ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ.

ມັນມີຕາຕະລາງການປຽບທຽບໂຄງການຢູ່ໃນປື້ມຄູ່ມືຫົວນີ້ທີ່ສະແດງໃຫ້ເຫັນການວັດແທກຄຸນນະພາບຂອງໂຄງການປິ່ນປົວສຸຂະພາບ ແລະ ຄະແນນ. ທ່ານສາມາດໃຊ້ຄະແນນເພື່ອຈະຊ່ວຍເຫລືອທ່ານຈະຕັດສິນໃດວ່າໂຄງການປິ່ນປົວສຸຂະພາບໂຄງການໃດຈະດີທີ່ສຸດສຳລັບທ່ານ. ທ່ານຍັງຈະພົບເຫັນການອະທິບາຍກ່ຽວກັບການວັດແທກ,ແລະເປັນຫຍັງການຮັບເອົາການປິ່ນປົວຈຶ່ງສຳຄັນສຳລັບທ່ານ ຫລືສຸຂະພາບຂອງສະມາຊິກຄອບຄົວຂອງທ່ານ.

## ຖ້າຫາກວ່າທ່ານຕ້ອງການການບໍຣິການປິ່ນປົວສຸຂະພາບກ່ອນທີ່ບັດຂອງທ່ານຈະມາຮອດ

ທ່ານຈະໄດ້ຮັບຫນັງສືທີ່ບອກທ່ານໃຫ້ຮູ້ຈັກໂຄງການສຸຂະພາບຂອງທ່ານ.ຖ້າຫາກວ່າທ່ານຕ້ອງການໄປພົບທ່ານຫມໍ ຫລື ຊື້ເອົາຢາສັ່ງຊື້ຈາກທ່ານຫມໍກ່ອນທີ່ບັດຂອງທ່ານຈະມາຮອດ, ຖືເອົາຫນັງ ສືສະບັບນີ້ໄປນຳທ່ານໄປຫາຜູ້ໃຫ້ການປິ່ນປົວສຸຂະພາບ ຫລື ຮ້ານຂາຍຢາ. ທ່ານສາມາດໄປຫາທ່ານຫມໍຄົນໃດກໍໄດ້, ຄລີນິກອະນາມັຍ, ຜູ້ໃຫ້ການປິ່ນປົວສຸຂະພາບການປະພຶດຫລື ຮ້ານຂາຍຢາຕາບໃດທີ່ທ່ານຫມໍຢູ່ໃນສາຍງານຂອງໂຄງການຂອງທ່ານ (ມີສັນຍານຳໂຄງການປິ່ນປົວສຸຂະພາບຂອງທ່ານ) .ຈົ່ງຕິດຕໍ່ຫາໂຄງການສຸຂະພາບຂອງທ່ານສຳລັບລາຍຊື່ຂອງທ່ານຫມໍ

ທ່ານຍັງສາມາດໂທຫາໂຄງການປິ່ນປົວສຸຂະພາບຂອງທ່ານໄດ້ອີກຄືກັນເພື່ອຄວາມຊ່ວຍເຫລືອ, ເຖິງແມ່ນວ່າທ່ານຈະບໍ່ທັນໄດ້ຮັບບັດບໍຣິການ services card ຫລື ບັດ ID ໂຄງການປິ່ນປົວສຸຂະພາບຂອງທ່ານກໍຕາມ.



# ການປິ່ນປົວທີ່ຖືກຄວບຄຸມນຳແມ່ນຫຍັງ?

Apple Health ສະເໜີໃຫ້ການປິ່ນປົວທີ່ຖືກຄວບຄຸມນຳໃນທ້ອງຖິ່ນທົ່ວຣັດທຸກໆບ່ອນ.ໂຄງການຂອງທ່ານປະສານງານການບໍລິການສຸຂະພາບຮ່າງກາຍ,ສຸຂະພາບການປະພຶດ, ແລະການປິ່ນປົວໂຣກການໃຊ້ຢາເສບຕິດເພື່ອຈະໃຫ້ການປິ່ນປົວບຸກຄົນທັງໝົດພາຍໃຕ້ໂຄງການປິ່ນປົວໂຄງການນຶ່ງ.

# ແຜນທີ່ຂອງເຂດການບໍລິການປິ່ນປົວທີ່ຖືກຄວບຄຸມນຳຂອງ Apple Health




ທ້ອງຖິ່ນຂອງການປິ່ນປົວທີ່ຖືກຄວບຄຸມນຳລວມກັນ

| | | | |
|---|---|---|---|
| Greater Columbia | Pierce | Salish | North Central |
| King | Spokane | Great Rivers | |
| North Sound | Thurston-Mason | Southwest Washington | |


Apple Health Foster Care (statewide)†

† Apple Health Foster Care ແມ່ການປິ່ນປົວທີ່ຖືກຄວບຄຸມນຳຄົນຖ້ວນດ້ຖືກເອົາໃຫ້ໂດຍຜ່ານ Apple Health Core Connections (Coordinated Care of Washington - CC).

ໂຄງການປິ່ນປົວສຸຂະພາບທີ່ຖືກສະເໜີໃຫ້

| | | |
|---|---|---|
| CC | – | Coordinated Care |
| CHPW | – | Community Health Plan of Washington |
| MHW | – | Molina Healthcare of Washington |
| UHC | – | UnitedHealthcare Community Plan of Washington |
| WLP | – | Wellpoint Washington (ເປັນທີ່ຮູ້ຈັກກັນມາກ່ອນ Amerigroup) |

# ແຜນທີ່ແລະຕາຕະລາງຂອງເຂດການບໍຣິການປິ່ນປົວທີ່ຖືກວບຸມນຳ

ເມທຣິກສ໌ຂອງເຂດບໍຣິການ-ແຈນຢູຣີ- 2025

| County | Community Health Plan of Washington | Integrated managed care | Molina Healthcare of Washington | United Healthcare of Washington | Wellpoint Washington (ເປັນທີ່ຮູ້ຈັກກັນມາກ່ອນ Amerigroup) |
|---|---|---|---|---|---|
| Adams | X | X | X | | X |
| Asotin | X | X | X | | X |
| Benton | X | X | X | | X |
| Chelan | X | X | X | | X |
| Clallam | X | X | X | X | X |
| Clark | X | X | X | | X |
| Columbia | X | X | X | | X |
| Cowlitz | X | X | X | X | X |
| Douglas | X | X | X | | X |
| Ferry | X | X | X | | X |
| Franklin | X | X | X | | X |
| Garfield | X | X | X | | X |
| Grant | X | X | X | | X |
| Grays Harbor | X | X | X | X | X |
| Island | X | X | X | X | X |
| Jefferson | X | X | X | X | X |
| King | X | X | X | X | X |
| Kitsap | X | X | X | X | X |
| Kittitas | X | X | X | | X |
| Klickitat | X | X | X | | X |
| Lewis | X | X | X | X | X |
| Lincoln | X | X | X | | X |
| Mason | X | X | X | X | X |
| Okanogan | X | X | X | | X |
| Pacific | X | X | X | X | X |
| Pend Oreille | X | X | X | | X |
| Pierce | X | X | X | X | X |
| San Juan | X | X | X | X | X |
| Skagit | X | X | X | X | X |
| Skamania | X | X | X | | X |
| Snohomish | X | X | X | X | X |
| Spokane | X | X | X | | X |
| Stevens | X | X | X | | X |
| Thurston | X | X | X | X | X |
| Wahkiakum | X | X | X | X | X |
| Walla Walla | X | X | X | | X |
| Whatcom | X | X | X | X | X |
| Whitman | X | X | X | | X |
| Yakima | X | X | X | | X |
| Foster Care (ທີ່ວຣັດ) | | X | | | |



**Note:** Apple Health Foster Care ແມ່ນໂຄງການທີ່ວຣັດ, ໄດ້ຖືກເອົາໃຫ້ຜ່ານໂຄງການ Apple Health Core Connections (Coordinated Care of Washington).

## ການເລືອກເອົາຜູ້ໃຫ້ການປະຖົມພະຍາບານ

ມັນສຳຄັນທີ່ຈະເລືອກເອົາຜູ້ໃຫ້ການປະຖົມພະຍາບານ (PCP). **ຖ້າຫາກວ່າທ່ານ ບໍ່ເລືອກເອົາ PCP ຄົນນຶ່ງ, ໂຄງການປິ່ນປົວສຸຂະພາບຂອງທ່ານຈະເລືອກເອົາຄົນນຶ່ງໃຫ້ທ່ານ.** PCP ຂອງທ່ານແມ່ນຜູ້ຊ່ຽວຊານດ້ານສຸຂະພາບຕົ້ນຕໍຂອງທ່ານທີ່ທ່ານຈະພົບ. ເຂົາເຈົ້າຈະກາຍເປັນຄູ່ມເຄີຍນຳປະວັດສຸຂະພາບຂອງທ່ານ, ບັນຫານຳສຸຂະພາບປັດຈຸບັນ, ແລະສາມາດສົ່ງທ່ານຕໍ່ໄປຫາຜູ້ຊ່ຽວຊານ. ການມີ PCP ຜູ້ເອົາໃຈໃສ່ນຳຈະເຮັດໃຫ້ງ່າຍຂຶ້ນທີ່ຈະຮັກສາສຸຂະພາບຂອງທ່ານ.

ເພື່ອຈະເລືອກເອົາ PCP ຄົນນຶ່ງ, ປະຕິບັດຕາມຄຳຊີ້ນຳທີ່ຖືກສົ່ງໄປໃຫ້ທ່ານໂດຍໂຄງການປິ່ນປົວສຸຂະພາບຂອງທ່ານ, ຫລື ໂທຫາເລກໂທຣະສັບຂອງພະແນກບໍຣິການສະມາຊິກຂອງໂຄງການປິ່ນປົວສຸຂະພາບຂອງທ່ານ. ທ່ານຍັງຈະສາມາດເລືອກເອົາ PCP ໂດຍຜ່ານແວບໄຊທ໌ຂອງໂຄງການປິ່ນປົວສຸຂະພາບຂອງທ່ານໄດ້ອີກຄືກັນ.

ຖ້າຫາກວ່າ PCP ທີ່ທ່ານຕ້ອງການບໍ່ຢູ່ໃນສາຍງານຂອງໂຄງການປິ່ນປົວສຸຂະພາບຂອງທ່ານ, ຖາມຜູ້ໃຫ້ການປິ່ນປົວວ່າເຂົາເຈົ້າຢູ່ໃນ ຫລື ເຮັດວຽກນຳໂຄງການປິ່ນປົວສຸຂະພາບອັນໃດແດ່. ທ່ານມີສິດທີ່ຈະປ່ຽນໂຄງການປິ່ນປົວສຸຂະພາບ

ທ່ານສາມາດເຈາະຈົງວ່າເພດໃດທີ່ທ່ານມັກຫລາຍກວ່າສຳລັບ PCP ຂອງທ່ານ. ທ່ານຍັງສາມາດຂໍເອົາຜູ້ໃຫ້ການປິ່ນປົວຜູ້ທີ່ປາກພາສາຂອງທ່ານ, ມີຄວາມຊ່ຽວຊານຳຄວາມເສັຽອົງຄະຂອງທ່ານ, ຫລື ເຂົ້າໃຈປະເພນີວັດທະນະທັມຂອງທ່ານ.

PCP ຂອງທ່ານຄວນຈະເປັນຄົນໃດຄົນນຶ່ງທີ່ທ່ານຮູ້ສຶກສະບາຍໃຈນຳ. ຖ້າຫາກວ່າທ່ານບໍ່ດີໃຈນຳ PCP ຂອງທ່ານດ້ວຍເຫດຜົນໃດກໍຕາມ, ໂທຫາສາຍໂທຣະສັບຂອງພະແນກບໍຣິການສະມາຊິກຂອງໂຄງການປິ່ນປົວສຸຂະພາບຂອງທ່ານໄດ້ໃນທຸກໆເວລາເພື່ອຈະປ່ຽນຜູ້ໃຫ້ການປິ່ນປົວຄົນໃຫມ່.

## ຖ້າຫາກວ່າທ່ານມີຜູ້ໃຫ້ການປະຖົມພະຍາບານແລ້ວ

ຖ້າຫາກວ່າທ່ານໄດ້ພົບກັບ PCP ຜູ້ທີ່ທ່ານມັກແລ້ວ, ຫລື ໄດ້ຍິນຂ່າວກ່ຽວກັບຜູ້ໃຫ້ການປິ່ນປົວທີ່ທ່ານຢາກຈະລອງເບິ່ງ, ທ່ານສາມາດຂໍເອົາຜູ້ໃຫ້ການປິ່ນປົວຄົນນັ້ນໄດ້. ແຕ່ວ່າ PCP ຂອງທ່ານຕ້ອງເປັນພາກສ່ວນນຶ່ງຂອງສາຍງານຂອງໂຄງການຂອງທ່ານ (ມີສັນຍານຳໂຄງການປິ່ນປົວສຸຂະພາບຂອງທ່ານ) .

ຖ້າຫາກວ່າຜູ້ໃຫ້ການປິ່ນປົວທີ່ທ່ານຕ້ອງການບໍ່ຢູ່ໃນສາຍງານຂອງໂຄງການປິ່ນປົວສຸຂະພາບຂອງທ່ານ, ຖາມຜູ້ໃຫ້ການປິ່ນປົວວ່າເຂົາເຈົ້າຢູ່ໃນ ຫລື ເຮັດວຽກນຳໂຄງການປິ່ນປົວສຸຂະພາບອັນໃດ.

## ຈະເຮັດຫມາຍນັດພົບໄດ້ແນວໃດ

ເມື່ອທ່ານໄດ້ເລືອກເອົາ PCP ຄົນນຶ່ງແລ້ວ, ໂທຫາເພື່ອຈະເຮັດຫມາຍນັດພົບ. ທ່ານຕ້ອງເຮັດຫມາຍນັດພົບເພື່ອຈະພົບກັ PCP. ຖ້າຫາກວ່າທ່ານມີຄວາມກັງວົນ ຫລື ຄວາມຕ້ອງການດ້ານສຸຂະພາບທັນທີ, ທ່ານຈະສາມາດພົບກັບ PCP ຂອງທ່ານພາຍໃນບໍ່ພໍເທົ່າໃດວັນ. ເຖິງແມ່ນວ່າທ່ານຈະບໍ່ມີຄວາມກັງວົນກ່ຽວກັບສຸຂະພາບທັນທີ, ເຮັດຫມາຍນັດພົບສຳລັບການກວດສຸຂະພາບທົ່ວໄປ (ຍັງຖືກເອີ້ນອີກວ່າການກວດສຸຂະພາບແຂງແຮງ) . ໂດຍທົ່ວໄປແລ້ວມັນຈະໃຊ້ເວລາດົນນານກວ່າທີ່ຈະເຮັດຫມາຍນັດພົບສຳລັບການກວດສຸຂະພາບທົ່ວໄປ, ເພາະສະນັ້ນແລ້ວຢ່າສູ່ໂຈະໄວ້ກ່ອນ.

| | |
|---|---|
| ການປິ່ນປົວເປັນປະຈຳ | ເຮັດຫມາຍນັດພົບນຳ PCP ຂອງທ່ານ. ທ່ານຄວນຈະສາມາດໄປພົບກັບທ່ານຫມໍ PCP ຂອງທ່ານ ຫລື ຜູ້ໃຫ້ການປິ່ນປົວຄົນອື່ນຢູ່ຫ້ອງການພາຍໃນ 10 ວັນ. |
| ການປິ່ນປົວປ້ອງກັນ | ເຮັດຫມາຍນັດພົບນຳ PCP ຂອງທ່ານ ຫລື ຜູ້ໃຫ້ການປິ່ນປົວຄົນອື່ນ. ທ່ານຄວນຈະສາມາດເຮັດຫມາຍນັດພົບໄດ້ພາຍໃນ 30 ວັນ. |
| ການປິ່ນປົວພິເສດສະເພາະ | ໂທຫາໂຄງການປິ່ນປົວສຸຂະພາບ ຫລື PCP ຂອງທ່ານ. |
| ການປິ່ນປົວສຸຂະພາບໂຣກຈິດ | ໂທຫາໂຄງການປິ່ນປົວສຸຂະພາບ ຫລື PCP ຂອງທ່ານ |
| ການປິ່ນປົວການໃຊ້ຢາເສບຕິດ | ໂທຫາໂຄງການປິ່ນປົວສຸຂະພາບ ຫລື PCP ຂອງທ່ານ. |
| ສຳລັບການປິ່ນປົວຫລັງຈາກຊົ່ວໂມງເຮັດການ | ໂທຫາສາຍໂທຣະສັບຄຳແນະນຳຈາກນາຍຫມໍຂອງໂຄງການປິ່ນປົວສຸຂະພາບຂອງທ່ານ 24 ຊົ່ວໂມງຕໍ່ວັນ, 7 ວັນຕໍ່ອາທິດ. |
| ສຳລັບການປິ່ນປົວຮີບດ່ວນ | ໄປຫາສູນກາງປິ່ນປົວດ່ວນບ່ອນທີ່ມີສັນຍານຳໂຄງການປິ່ນປົວສຸຂະພາບຂອງທ່ານ, ຫລື ໂທຫາ PCP ຂອງທ່ານ ຫລື ສາຍໂທຣະສັບຄຳແນະນຳຈາກນາຍຫມໍ.ທ່ານຄວນຈະສາມາດໄປພົບກັບທ່ານຫມໍ PCP ຂອງທ່ານ ຫລື ຜູ້ໃຫ້ການປິ່ນປົວຄົນອື່ນພາຍໃນ 24 ຊົ່ວໂມງ. |
| ສຳລັບການປິ່ນປົວສຸກເສີນ | ໂທຫາ 911 ຫລື ໄປຫາສະຖານທີ່ໄກ້ທີ່ສຸດບ່ອນທີ່ຜູ້ໃຫ້ການປິ່ນປົວສຸກເສີນສາມາດຊ່ວຍເຫລືອໄດ້. ໂດຍໄວເທົ່າທີ່ຈະໄວໄດ້, ທ່ານ ຫລື ຄົນໃດຄົນນຶ່ງຜູ້ທີ່ທ່ານຮູ້ຈັກຕ້ອງໄດ້ໂທຫາ PCP ຂອງທ່ານ ຫລື ໂຄງການປິ່ນປົວສຸຂະພາບຂອງທ່ານເພື່ອຈະລາຍງານເຫດການສຸກເສີນຂອງທ່ານ. |
| ສຳລັບການປິ່ນປົວໄກຈາກບ້ານ | ຖ້າຫາກວ່າບໍ່ແມ່ນເຫດການສຸກເສີນ, ໂທຫາ PCP ຫລື ສາຍໂທຣະສັບຄຳແນະນຳຈາກນາຍຫມໍ, ທີ່ຖືກຂຽນຢູ່ໃນບັດ ID ໂຄງການຂອງທ່ານ. |

## ການບໍລິການປິ່ນປົວສຸຂະພາບການປະພຶດ

ຖ້າຫາກວ່າທ່ານໄດ້ຈົດຊື່ເຂົ້າໃນໂຄງການ Apple Health, ທ່ານມີການເຂົ້າເຖິງການປິ່ນປົວສຸຂະພາບໂຣກຈິດ ແລະ ການປິ່ນປົວການໃຊ້ຢາເສບຕິດ **(ລວມເຂົ້າກັນເປັນທີ່ຮູ້ຈັກວ່າແມ່ນການປິ່ນປົວສຸຂະພາບການປະພຶດ)** .ການບໍລິການສຸຂະພາບການປະພຶດໄດ້ຖືກລວມຢູ່ນຳຊຸດ

ຕິດຕໍ່ຫາໂຄງການປິ່ນປົວສຸຂະພາບ ຫລື ຜູ້ໃຫ້ການປະຖົມພະຍາບານຂອງທ່ານຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອນຳການປະສານງານການປິ່ນປົວຂອງທ່ານ.

### ການບໍລິການປິ່ນປົວໂຣກການໃຊ້ສານພິດອາດຈະລວມເອົາ

**ການປະເມີນຜົນ –** "ການສຳພາດ" ໂດຍຜູ້ໃຫ້ການປິ່ນປົວສຸຂະພາບເພື່ອຈະຕັດສິນການບໍລິການປິ່ນປົວທີ່ທ່ານຕ້ອງການ.

**ການເຂົ້າແຊກແຊງສັ້ນໆ –** ເວລາຈຳກັດ, ເພື່ອຈະລຸດຜ່ອນບັນຫານຳການໃຊ້. ທ່ານ **ບໍ່ຕ້ອງ** ໄດ້ຮັບການປະເມີນຜົນເບິ່ງໂຣກການຕິດຢາເສບຕິດກ່ອນໂຮງຫມໍກ່ອນການບໍລິການອັນນີ້.

**ການຄວບຄຸມນຳການຖອນ(ການຖອນພິດ) –** ການຊ່ວຍເຫລືອນຳການລຸດຜ່ອນການໃຊ້ເຫລົ້າ ຫລື ຢາເສບຕິດແນວອື່ນໃນຣະຍະຍາວ,ຈົນກວ່າມັນຈະປອດພັຍທີ່ຈະຢຸດການໃຊ້. ທ່ານບໍ່ຕ້ອງໄດ້ຮັບການປະເມີນຜົນເບິ່ງໂຣກການຕິດຢາເສບຕິດກ່ອນໂຮງຫມໍກ່ອນການບໍລິການອັນນີ້.

**ການປິ່ນປົວບໍ່ນອນສະຖານທີ່ປິ່ນປົວ –** ການປຶກສາສ່ວນບຸກຄົນ ແລະ ເປັນກຸ່ມຢູ່ໃນຊຸມນຸມຊົນຂອງທ່ານ.

**ການປິ່ນປົວບໍ່ນອນສະຖານທີ່ປິ່ນປົວເຂັ້ມງວດ –** ການປຶກສາສ່ວນບຸກຄົນ ແລະ ເປັນກຸ່ມຫລາຍໆເທື່ອກວ່າ.

**ການປິ່ນປົວນອນຢູ່ສະຖານທີ່ປິ່ນປົວ –** ໂຄງການຄົບຖ້ວນຂອງການປຶກສາສ່ວນບຸກຄົນ, ການປຶກສາເປັນກຸ່ມ, ແລະ ການສຶກສາທີ່ຖືກເອົາໃຫ້ໃນສະຖານທີ່ຊຶ່ງຖືກຄວບຄຸມເບິ່ງນຳຕະລອດ 24 ຊົ່ວໂມງຕໍ່ມື້.

**ການປິ່ນປົວໃຊ້ແທນຢາຝິ່ນ –** ເອົາການປະເມີນຜົນບໍ່ນອນສະຖານທີ່ປິ່ນປົວໃຫ້ ແລະ ການປິ່ນປົວສຳລັບການຕິດຢາຝິ່ນ. ລວມທັງຢາທີ່ຖືກອະນຸມັດໃຫ້ ແລະ ການປຶກສາ.

**ການຄວບຄຸມເບິ່ງນຳກໍຣະນີ –** ການຊ່ວຍເຫລືອນຳການຊອກເອົາການບໍລິການທາງດ້ານການພະຍາບານ, ສັງຄົມ, ການສຶກສາ, ແລະ ການບໍລິການອື່ນໆ.





## ການປິ່ນປົວສຸຂະພາບໂຣກຈິດຈະລວມເອົາ:

**ການ ປະເມີນຜົນເບິ່ງສຸຂະພາບໂຣກຈິດບໍ່ນອນໂຮງພະຍາບານ –** ຊີ້ບອກຄວາມຕ້ອງການ ແລະ ເປົ້າຫມາຍຂອງທ່ານ ແລະ ຊ່ວຍຜູ້ໃຫ້ການປິ່ນປົວສຸຂະພາບໂຣກຈິດຂອງທ່ານໃຫ້ ແນະນຳການບໍຣິການ ແລະ ແຜນການປິ່ນປົວແນວອື່ນ.

**ການປິ່ນປົວສ່ວນບຸກຄົນ –** ການປຶກສາ ແລະ/ຫລື ກິຈກັມອື່ນໆທີ່ຖືກອອກແບບມາ ເພື່ອຈະບັນລຸເປົ້າຫມາຍຂອງທ່ານຢູ່ໃນແຜນການປິ່ນປົວຂອງທ່ານ.

**ການຄວບຄຸມເບິ່ງນຳຢາ –** ພະນັກງານທີ່ມີໃບປະກາດສັ່ງຊື້ຢາ ແລະ ເວົ້ານຳທ່ານ ກ່ຽວກັບຜົນສະທ້ອນຂອງຢາ.

**ການສອດແນມເບິ່ງນຳຢາ –** ການບໍຣິການເພື່ອຈະເບິ່ງວ່າຢາຂອງທ່ານທຳງານ ແນວໃດ ແລະ ເພື່ອຈະຊ່ວຍທ່ານໃຫ້ໃຊ້ຢາຢ່າງ ຖືກຕ້ອງ.

**ການບໍຣິການປິ່ນປົວເປັນກຸ່ມ –** ການປຶກສານຳຄົນອື່ນຜູ້ທີ່ມີບັນຫາຄ້າຍຄືກັນ.

**ການອູ້ມຊູຈາກຫມູ່ເພື່ອນ –** ການຊ່ວຍເຫລືອນຳການຜ່ານຜ່າຣະບົບການປິ່ນ ປົວໂຣກຈິດ ແລະ ການບັນລຸເປົ້າຫມາຍຂອງການພັກຟື້ນຂອງທ່ານ, ທີ່ຖືກເອົາ ໃຫ້ໂດຍບຸກຄົນຜູ້ທີ່ຖືກຝຶກຝົນມາຜູ້ທີ່ມີອຸບປະສັກຄ້າຍຄຽງກັນ.

**ການເວົ້າແຊກແຊງນຳສັ້ນໆ ແລະ ການປິ່ນປົວ –** ການປຶກສາສັ້ນໆທີ່ມຸ່ງຫມາຍ ໃສ່ບັນຫາເຈາະຈົງ.

**ການປິ່ນປົວຄອບຄົວ –** ການປຶກສາມຸ່ງສູນໃສ່ຄອບຄົວເພື່ອຈະຊ່ວຍກໍ່ສ້າງຄວາມສັມ ພັນໃຫ້ຫມັ້ນຄົງກວ່າເກົ່າ ແລະ ແກ້ໄຂບັນຫາ.

**ການປິ່ນປົວເຂັ້ມງວດ –** ການບໍຣິການປິ່ນປົວທີ່ຖືກເອົາໃຫ້ໂດຍຄະນະທີມງານທ່ານ ຫມໍສຸຂະພາບໂຣກຈິດເພື່ອຈະຊ່ວຍເຫລືອທ່ານໃຫ້ບັນລຸເປົ້າຫມາຍຂອງທ່ານຢູ່ໃນ ແຜນການປິ່ນປົວຂອງທ່ານ.

**ການສຶກສາບຳບັດຈິດໃຈ –** ການສຶກສາກ່ຽວກັບພະຍາດໂຣກຈິດ,ທາງເລືອກເອົາ ການປິ່ນປົວສຸຂະພາບໂຣກຈິດ, ຢາ ແລະ ການພັກຟື້ນ,ລວມທັງການອູ້ມຊູ ແລະ/ ຫລື ການບໍຣິການອູ້ມຊູຊ່ວຍເຫລືອ.

**ການອູ້ມຊູການເວັນ –** ໂຄງການຊ່ວຍເຂັ້ມງວດເພື່ອຈະຮຽນຮູ້ຫລື ຊ່ວຍເຫລືອນຳ ຄວາມຊຳນານນຳການດຳຣົງຊີວິດອິດສະຣະ.

**ການຕີຣາຄາປະເມີນຜົນ ແລະ ການປິ່ນປົວ/ການນອນໂຮງພະຍາບານຊຸມນຸມຊົນ –** ການປິ່ນປົວພະຍາບານຍາມສຸກເສີນທີ່ຈຳເປັນທາງດ້ານການແພດລວມທັງການນອນ ຄ້າງຄືນຫລືດົນນານຢູ່ໂຮງ ພະຍາບານ,ຫລືບ່ອນອື່ນໆເພື່ອເອົາການປິ່ນປົວໄກ້ສິດໃຫ້ ສຳລັບການປິ່ນປົວການປະພຶດ.ທ່ານບໍ່ຕ້ອງໄດ້ຮັບການ ປະເມີນຜົນເບິ່ງສຸຂະພາບການ ປະພຶດບໍ່ນອນໂຮງພະຍາບານກ່ອນການບໍຣິການອັນນີ້.

**ການບໍຣິການປິ່ນປົວໃຫ້ທຸ່ມທ່ຽງ –** ຖືກເອົາໃຫ້ຢູ່ໃນເຮືອນຂອງທ່ານ ຫລື ໃນລັກ ສະນະແວດລ້ອມຄືກັບເຮືອນເພື່ອຈະຫລີກເວັ້ນການຢູ່ໃນໂຮງພະຍາບານ. ທ່ານ **ບໍ່ຕ້ອງ** ໄດ້ເຮັການ ປະເມີນຜົນເບິ່ງສຸຂະພາບການປະພຶດບໍ່ນອນໂຮງພະຍາບານ ກ່ອນການບໍຣິການອັນນີ້.

**ການຄວບຄຸມເບິ່ງນຳໃຫ້ເຂົ້າສູ່ສະພາບເດີມ –** ການປະສານງານຣະຫວ່າງການບໍຣິ ການປິ່ນປົວສຸຂະພາບໂຣກຈິດນອນໂຮງຫມໍ ແລະ ບໍ່ນອນໂຮງຫມໍ. ທ່ານ **ບໍ່ຕ້ອງ** ໄດ້ ເຮັການ ປະເມີນຜົນເບິ່ງສຸຂະພາບການປະພຶດບໍ່ນອນໂຮງພະຍາບານບໍ່ນອນໂຮງ ຫມໍກ່ອນການບໍຣິການອັນນີ້.

**ການບໍຣິການປິ່ນປົວສຸຂະພາບໂຣກຈິດທີ່ຖືກເອົາໃຫ້ຢູ່ສະຖານທີ່ຄ້າຍຄືເຮືອນ –** ການບໍຣິການຖືກເອົາໃຫ້ຢູ່ບ່ອນທີ່ທ່ານອາສັຍຢູ່ຖ້າຫາກວ່າທ່ານອາສັຍຢູ່ໃນສະ ຖານທີ່ແບບເປັນກຸ່ມ.

**ການຕີຣາຄາປະຊາຊົນພິເສດ –** ຄວາມຊ່ວຍເຫລືອນຳການວາງແຜນປິ່ນປົວຈາກ ຜູ້ຊ່ຽວຊານຜູ້ທີ່ເຮັດວຽກນຳພົລເມືອງພິເສດ, ເຊັ່ນວ່າເດັກນ້ອຍ, ຜູ້ໃຫຍ່ຄົນແກ່ກວ່າ ແລະ ບຸກຄົນມາຈາກເບື້ອງຫລັງຫລາຍປະເພນີອື່ນໆ.

**ການປະເມີນຜົນເບິ່ງໂຣກຈິດ –** ການກວດເບິ່ງທີ່ຊ່ວຍໄດ້ນຳການວິຈັຍພະຍາດ, ການຕີຣາຄາ ແລະ ການວາງແຜນການປິ່ນປົວ.

## ການບໍຣິການໃນພາວະສຸກເສີນ

ການບໍຣິການໃນພາວະສຸກເສີນແມ່ນການບໍຣິການ 24 ຊົ່ວໂມງທີ່ມຸ່ງຫມາຍໃສ່ທີ່ຈະ ເຮັດໃຫ້ທ່ານຫມັ້ນຄົງຖ້າຫາກວ່າທ່ານຕົກຢູ່ໃນພາວະສຸກເສີນ, ໂດຍທີ່ວ່າຢູ່ໃນສະຖານ ທີ່ຊຶ່ງເຫມາະສົມທີ່ສຸດທີ່ຈະຕອບສະນອງຄວາມຕ້ອງການຂອງທ່ານ. ທ່ານ **ບໍ່ຕ້ອງ** ໄດ້ ເຮັດ ການ ປະເມີນຜົນເບິ່ງສຸຂະພາບການປະພຶດບໍ່ນອນໂຮງພະຍາບານບິ່ງກ່ອນການ ບໍຣິການອັນນີ້.

- ເພື່ອຄວາມຊ່ວຍເຫລືອທັນທີ, ໂທຫາ 911 ຫລື ໄປຫາຫ້ອງສຸກເສີນຢູ່ໂຮງພະຍາບານ ໄກ້ບ້ານທ່ານທີ່ສຸດ. ໂທຫາ 988 ສຳລັບເຫດການສຸກເສີນສຸຂະພາບໂຣກຈິດ. ທ່ານ ບໍ່ຕ້ອງ ມີການອະນຸມັດສຳລັບການບໍຣິການໃນພາວະສຸກເສີນ.
- ສຳລັບລາຍຊື່ເລກໂທຣະສັບຂອງສາຍດ່ວນພາວະສຸກເສີນຂອງຣັດ,ແວ່ເຂົ້າເບິ່ງ: **hca.wa.gov/mental-health-crisis-lines.**
- **Washington Recovery Help Line** ແມ່ນສາຍເວົ້າແຊກແຊງ ແລະ ສິ່ງຕໍ່ໃນພາວະສຸກເສີນ 24-ຊົ່ວໂມງສຳລັບຜູ້ທີ່ກຳລັງຕໍ່ສູ້ນຳບັນຫາກ່ຽວພັນນຳ ສຸຂະພາບໂຣກຈິດ, ການຕິດຢາເສບຕິດ, ແລະ ບັນຫານຳການພະນັນ. ໂທຫາເລກ 1-866-789-1511 (TTY 206-461-3219); ອີເມລ໌ໄປທີ່ **recovery@crisisclinic.org**, ຫລື ແວ່ເຂົ້າປັຽມ **warecoveryhelpline.org.** ວັຍຣຸ່ນສິບກວ່າປີສາມາດຕິດແທດນຳວັຍ ຣຸ່ນສິບກວ່າປີໄດ້ໃນຣະຫວ່າງເວລາອັນເຈາະຈົງ: ໂທຫາ 1-866-833-6546, ອີແມລ໌ **teenlink@crisisclinic.org,** ຫລື ແວ່ເຂົ້າປັຽມ **866teenlink.org**.
- ສຳລັບສາຍດ່ວນ National Suicide Prevention Lifeline: ໂທຫາ ຫລື ເທັກສ໌ຫາ 988 ຫລືໂທຫາເລກ 1-800-273-8255 (ຜູ້ໃຊ້ TTY 1-800-799-4889).

## ຣາຍຣະອຽດສຳລັບຄົນອະເມຣິກັນອິນດຽນ ແລະ ຄົນອາລາສກາດັ້ງເດີມ

ຖ້າຫາກວ່າທ່ານເປັນຄົນອະເມຣິກັນອິນດຽນ ຫລື ຄົນອາລາສກາດັ້ງເດີມ, ທ່ານອາດຈະສາມາດໄດ້ຮັບການບໍຣິການປິ່ນປົວສຸຂະພາບຜ່ານໂຄງການ **Indian Health Service facility, tribal health care program** ຫລື **Urban Indian Health Program (UIHP)** ເຊັ່ນວ່າ Seattle Indian Health Board ແລະ NATIVE Project of Spokane. ທ່ານໜໍຢູ່ຕາມສະຖາບັນເຫລົ່ານີ້ຮູ້ຈັກປະເພນີວັດທະນະທັມ ຂອງທ່ານ,ຊຸມນຸມຊົນ,ແລະຄວາມຕ້ອງການດ້ານການປິ່ນປົວ ສຸຂະພາບຂອງທ່ານ.

ເຂົາເຈົ້າຈະເອົາໃຫ້ທ່ານການປິ່ນປົວທີ່ທ່ານຕ້ອງການ ຫລື ສົ່ງທ່ານໄປຫາຜູ້ຊ່ຽວຊານ. ເຂົາເຈົ້າຍັງຈະຊ່ວຍເຫລືອທ່ານນຳການຕັດສິນໃຈທີ່ທ່ານຕ້ອງການທີ່ຈະເຮັດກ່ຽວກັບວ່າຈະເລືອກເອົາໂຄງການປິ່ນປົວທີ່ຖືກຄວບຄຸມນຳ ຫລື ບໍ່ (ຊຶ່ງອາດຈະເປັນ ໂຄງການ Behavioral Health Services Only [BHSO] plan), ຫລື ການຄຸ້ມກັນ Apple Health ໂດຍປາສຈາກການປິ່ນປົວທີ່ຖືກຄວບຄຸມນຳ (ອັນນີ້ຖືກເອີ້ນວ່າ Apple Health fee-for-service) . ຖ້າຫາກວ່າທ່ານມີຄຳຖາມກ່ຽວ ກັບການປິ່ນປົວສຸຂະພາບຂອງທ່ານ ຫລື ການຄຸ້ມກັນການປິ່ນປົວສຸຂະພາບຂອງທ່ານ, ພະນັກງານຂອງຊົນເຜົ່າຂອງທ່ານ ຫລື UIHP ອາດຈະສາມາດຊ່ວຍເຫລືອທ່ານໄດ້.



## ການບໍຣິຫານສຳນວນເອກສານຂອງການປະຖົມພະຍາບານ

ສະຖານທີ່ IHS ບາງບ່ອນ,ໂຄງການປິ່ນປົວສຸຂະພາບຂອງ ຊົນ ເຜົ່າ,ແລະ UIHPs ເອື້ອເຟື້ອໃຫ້ມີ ການບໍຣິຫານສຳນວນ ເອກ ສານຂອງການປະຖົມພະຍາບານ (PCCM) ຖ້າຫາກວ່າ ທ່ານເລືອກເອົາການຄຸ້ມກັນ Apple Health ໂດຍປາສຈາກ ໂຄງການສຸຂະພາບທີ່ຖືກຄວບຄຸມນຳ. PCCM ແມ່ນໂຄງການ Apple Health ທີ່ອູ້ມຊູການບໍຣິຫານແລະການປະສານ ງານໃນການປິ່ນປົວສຸຂະພາບຂອງທ່ານ,ລວມທັງການສົ່ງທ່ານຕໍ່ໄປຫາຜູ້ຊ່ຽວຊານເມື່ອເວລາຈຳເປັນ,ສຳລັບການຕີຣາ ຄາປະເມີນຜົນແລະການປິ່ນປົວ. ຖ້າຫາກວ່າທ່ານສົນໃຈໃນ ໂຄງການ PCCM, ທ່ານສາມາດຖາມນຳສະຖານທີ່ IHS ຂອງ ທ່ານ,ໂຄງການປິ່ນປົວສຸຂະພາບຊົນເຜົ່າ,ຫລື UIHP ຖ້າຫາກ ວ່າທ່ານເຂົ້າຮ່ວມນຳໂຄງການ PCCM ແລະວ່າທ່ານສາມາດ ຈົດຊື່ເຂົ້າຮ່ວມໄດ້ຫລືບໍ່.ທ່ານສາມາດຈົດຊື່ຫລືເຊົາຈົດຊື່ຈາກໂຄງການ PCCM ໄດ້ໃນທຸກໆເວລາ,ແຕ່ວ່າການຈົດຊື່ຫລື ເຊົາຈົດຊື່ຂອງທ່ານຈະບໍ່ມີຜົນໃຊ້ໄດ້ຈົນກວ່າເດືອນທີ່ມີໃຫ້ ຕໍ່ມາ.

## ຫົນທາງທີ່ຈະຮັບເອົາການປິ່ນປົວສຸຂະພາບ

HCA ເອົາທາງເລືອກໃຫ້ຄົນອະເມຣິກັນອິນດຽນ ແລະ ຄົນອາລາສກາດັ້ງເດີມຢູ່ໃນຣັດວໍຊິງຕັນຣະຫວ່າງການປິ່ນປົວທີ່ຖືກຄວບຄຸມນຳຂອງ Apple Health ແລະການຄຸ້ມກັນ Apple Health ໂດຍປາສຈາກການຄຸ້ມກັນທີ່ຖືກຄວບຄຸມນຳ. HCA ເຮັດແນວນີ້ ເພື່ອຈະສອດຄ່ອງນຳກົດຣະບຽບຂອງຣັດຖະບານກາງ,ໃນການຮັບຮູ້ຄວາມຫຍຸ້ງຍາກສັບສົນຂອງຣະບົບການໃຫ້ການປິ່ນປົວສຸຂະພາບຂອງຄົນອິນດຽນ, ແລະ ເພື່ອຈະຊ່ວຍຮັບປະກັນວ່າທ່ານມີການເຂົ້າເຖິງການປິ່ນປົວສຸຂະພາບທີ່ເຫມາະສົມຕໍ່ປະເພນີວັດທະນະທັມ.

- ຢູ່ໃນການຄຸ້ມກັນ Apple Health ປາສຈາກການປິ່ນປົວທີ່ບໍ່ຖືກຄວບຄຸມນຳ, ທ່ານຈະເລືອກເອົາຜູ້ໃຫ້ການປິ່ນປົວຄົນໃດຄົນນຶ່ງຜູ້ທີ່ເຂົ້າຮ່ວມນຳໃນໂຄງການ Apple Health fee-for-service ແລະ ກຳລັງຮັບເອົາຄົນເຈັບຢູ່ໃນປັດຈຸບັນນີ້. ຜູ້ໃຫ້ການບໍຣິການເຫລົ່າ ນີ້ຍັງຈະຕ້ອງໄດ້ສອດຄ່ອງນຳກົດກຳນົດທຸກໆຢ່າງຂອງໃບອະນຸຍາດທີ່ຣັດເຮັດອອກໃຫ້ຂອງເຂົາເຈົ້າ. ເພື່ອຈະຊອກຫາຜູ້ໃຫ້ການປິ່ນປົວສຸຂະພາບApple Health fee-for-service, ແວ່ເຂົ້າຢ້ຽມ **https://fortress.wa.gov/hca/p1findaprovider.**

*ທາງເລືອກເອົາອັນນີ້ສາມາດເຂົ້າໃຈໄດ້ຖ້າຫາກວ່າການປິ່ນປົວຂອງທ່ານໄດ້ຖືກຄວບຄຸມເບິ່ງນຳແລ້ວ, ເຊັ່ນວ່າໂດຍໂຄງການປິ່ນປົວສຸຂະພາບຂອງຊົນເຜົ່າ ຫລື UIHP.*

- ດ້ວຍການປິ່ນປົວທີ່ຖືກຄວບຄຸມນຳຂອງ Apple Health, ການປິ່ນປົວສຸຂະພາບຂອງທ່ານໄດ້ຖືກຄວບຄຸມນຳໂດຍ ອົງການຄວບຄຸມນຳການປິ່ນປົວ MCO ອັນນີ້ຫມາຍຄວາມວ່າ MCO ໃຊ້ເປັນຈຸດຕິດຕໍ່ບ່ອນດຽວຂອງທ່ານເພື່ອຈະໄດ້ຮັບການບໍຣິການແລະຊ່ວຍປະສານງານການປິ່ນປົວຂອງທ່ານ.

*ທາງເລືອກອັນນີ້ສາມາດເຂົ້າໃຈໄດ້ຖ້າຫາກວ່າທ່ານບໍ່ມີຄົນໃດຄົນນຶ່ງຄວບຄຸມເບິ່ງນຳການປິ່ນປົວຂອງທ່ານ.*

ທ່ານສາມາດປ່ຽນການເລືອກເອົາຂອງທ່ານໄດ້ໃນທຸກໆເວລາ,ແຕ່ວ່າການປ່ຽນແປງຈະບໍ່ມີຜົນບັງຄັບໃຊ້ໄດ້ຈົນກວ່າເດືອນທີ່ມີຢູ່ຕໍ່ມາ. ຖ້າຫາກວ່າທ່ານໄດ້ຖືກຕິດແທດນຳ ຫລື ເຮັດວຽກຮ່ວມກັນນຳ Tribal Assister ຜ່ານສະຖານທີ່ຫສ, ໂຄງການ Tribal Health ຫລືູຫ້ຳ, ເຂົາເຈົ້າສາມາດຊ່ວຍເຫລືອທ່ານທຳການຕັດສິນໃຈໄດ້.ທ່ານຍັງສາມາດຕິດຕໍ່ຫາ Health Care Authority ໄດ້ທີ່ເລກ1-800-562-3022 ເພື່ອຈະບອກໃຫ້ພວກເຮົາຮູ້ຈັກທາງເລືອກຂອງທ່ານ, ລວມທັງການປ່ຽນແປງຕ່າງໆທີ່ທ່ານປະສົງຢາກເຮັດ, ແລະ ເພື່ອຈະຖາມຄຳຖາມ.

# ລາຍລະອຽດສຳລັບລູກຄ້າທີ່ຖືກຈົດຊື່ເຂົ້າໃນໂຄງການ **Apple Health Expansion**

ຖ້າຫາກວ່າທ່ານເປັນຄົນເຂົ້າເມືອງມາຕັ້ງຖິ່ນຖານທີ່ມີອາຍຸອາຍຸ 19 ປີຫລື ແກ່ກວ່າຜູ້ທີ່ສອດຄ່ອງນຳກົດກຳນົດເງື່ອນໄຂຮັບເອົາ,ທ່ານຈະໄດ້ຮັບການຄຸ້ມກັນສຸຂະພາບຂອງທ່ານພາຍໃຕ້ໂຄງການ Apple Health Expansion.

ພາຍໃຕ້ໂຄງການອັນນີ້,ທ່ານໄດ້ຖືກຈົດຊື່ເຂົ້າໃນໂຄງການປິ່ນປົວສຸຂະພາບທີ່ຖືກເອື້ອເຟື້ອໃຫ້ຢູ່ໃນຄາວຕີຂອງທ່ານ. ໂຄງການອັນນີ້ຄວບຄຸມການຄຸ້ມກັນສຸຂະພາບ ຂອງທ່ານແລະເປັນຈຸດການຕິດຕໍ່ຂອງທ່ານສຳລັບຄວາມຊ່ວຍເຫລືອໃນການຮັບເອົາການບໍລິການປິ່ນປົວແລະການປະສານງານການປິ່ນປົວຂອງທ່ານ.

ຮຽນຮູ້ເພີ້ມເຕີມກ່ຽວກັບໂຄງການ Apple Health Expansion ໄດ້ທີ່ **hca.wa.gov/apple-health-expansion**.

## ໂຄງການປິ່ນປົວສຸຂະພາບທີ່ມີໄວ້ໃຫ້

ທ່ານມີທາງເລືອກເອົາລະຫວ່າງຢ່າງຫນ້ອຍໂຄງການປິ່ນປົວສຸຂະພາບສາມໂຄງການຢູ່ໃນຄາວຕີບ່ອນທີ່ທ່ານອາສັຍຢູ່.ແວ່ປ່ຽມ **hca.wa.gov/ahe-service-area-map** ເພື່ອຈະເບິ່ງໂຄງການທີ່ມີຢູ່ໃນຄາວຕີຂອງທ່ານ.

ທ່ານສາມາດປ່ຽນໂຄງການສຸຂະພາບຂອງທ່ານໄດ້ໃນທຸກໆເວລາ.ການປ່ຽນແປງຈະມີຜົນບັງຄັບໃຊ້ໄດ້ໃນວັນທຳອິດຂອງເດືອນຕໍ່ມາ,ໂດຍຂື້ນນຳວ່າການປ່ຽນແປງໄດ້ຖືກ ເຮັດເມື່ອໃດ.ທ່ານຈະຕິດຕໍ່ຫາ Health Care Authority ໄດ້ທີ່ 1-800-562-3022 ເພື່ອຈະບອກໃຫ້ພວກເຮົາຊາບໃນທາງເລືອກເອົາຂອງທ່ານ, ລວມທັງການປ່ຽນແປງຕ່າງໆທີ່ທ່ານຢາກຈະເຮັດ,ແລະເພື່ອຈະຖາມຄຳຖາມ.ມັນມີຫລາຍຫົນທາງທີ່ຈະປ່ຽນໂຄງການຂອງທ່ານ,ຮຽນຮູ້ເພີ້ມເຕີມໄດ້ທີ່ **hca.wa.gov/change-my-plan.**

## ສະວັດດີການແລະການບໍລິການ

Apple Health Expansion ລວມເອົາການບໍລິການປິ່ນປົວສ່ວນຫລາຍທີ່ຖືກຄຸ້ມກັນພາຍໃຕ້ໂຄງການ Apple Health ອື່ນໆ.ທ່ານມີການເຂົ້າເຖິງການພະຍາບານ,ການປົວແຂ້ວ,ຮ້ານຂາຍຢາ,ແລະການປິ່ນປົວສຸຂະພາບການປະພຶດພາຍ ໃຕ້ການຄຸ້ມກັນ Apple Health Expansion ຂອງທ່ານ.
ການບໍລິການປິ່ນປົວບາງຢ່າງບໍ່ມີໄວ້ໃຫ້ພາຍໃຕ້ການຄຸ້ມກັນ Apple Health Expansion. ປົວອັນນີ້ລວມເອົາແຕ່ບໍ່ຈຳກັດໄປເຖິງ:

- ການກວດກັ່ນກອງ,ການວິຈັຍ,ແລະການປິ່ນປົວເປັນລະຍະໃນຂັ້ນເລີ້ມແຣກ (EPSDT)
- ການຄວບຄຸມເບິ່ງນຳທີ່ຖືກອູ້ມຊູ
- ການເບິ່ງແຍງຄົນຊາລາສ່ວນເອກຊົນ
- ການປິ່ນປົວຢູ່ສະຖານທີ່ເບິ່ງແຍງຄົນຊາລາລະຍະຍາວ
- ສະຖານທີ່ການປິ່ນປົວລະຫວ່າງກາງ
- ໂຄງການສຸຂະພາບຢູ່ຕາມເຮືອນ
- ການບໍລິການກ່ຽວກັບການຖືພາຕັ້ງທ້ອງແລະຫລັງຈາກການຖືພາ

ຖ້າຫາກວ່າທ່ານມີຄຳຖາມແນວໃດກ່ຽວກັບການຄຸ້ມກັນສຸຂະພາບຂອງທ່ານ, ຕິດຕໍ່ຫາໂຄງການປິ່ນປົວສຸຂະພາບຂອງທ່ານ,ຕິດຕິດຕໍ່ຫາໂຄງການສຸຂະພາບຂອງທ່ານ. ເລກໂທຂອງໂຄງການສຸຂະພາບຂອງທ່ານຖືກບົ່ງຢູ່ຫນ້າ 5 ຂອງ ປື້ມນ້ອຍຫົວນີ້.

## ການຄຸ້ມກັນ **Apple Health** ສຳລັບຄອບຄົວຂອງທ່ານ

ໂຄງການ Apple Health ຕໍ່ລົງໄປນີ້ມີໄວ້ໃຫ້ບໍ່ກ່ຽວກັບສະພາບການເປັນສັນຊາດຫລືການເຂົ້າເມືອງ.

### Apple Health ສຳລັບເດັກນ້ອຍ

- ເດັກນ້ອຍອາຍຸສູງເຖິງ 19 ປີຈະມີເງື່ອນໄຂໄດ້ຮັບທາງເລືອກເອົາການຄຸ້ມກັນຟຣີອັນນີ້.ຮຽນຮູ້ເພີ້ມເຕີມໄດ້ທີ່ **hca.wa.gov/apple-health-children**.

### Apple Health ສຳລັບຜູ້ຍິງຖືພາຕັ້ງທ້ອງ

- ຖ້າຫາກວ່າທ່ານກາຍເປັນຖືພາຕັ້ງທ້ອງໃນຂະນະທີ່ຖືກຈົດຊື່ເຂົ້າໃນໂຄງການ Apple Health Expansion, ທ່ານຈະປ່ຽນມາເປັນ Apple Health ສຳລັບຜູ້ຍິງຖືພາຕັ້ງທ້ອງ.ຮຽນຮູ້ເພີ້ມເຕີມໄດ້ທີ່ **hca.wa.gov/apple-health-pregnant-individuals**.
- ຮັກສາຄຳຮ້ອງຂອງທ່ານໃຫ້ທັນກັບສະພາບການໂດຍການລາຍງານການປ່ຽນແປງພາຍໃນ 30 ວັນ,ລວມທັງການຖືພາຕັ້ງທ້ອງ.

### ການຄຸ້ມກັນຫລັງຈາກການຖືພາຕັ້ງທ້ອງ

- ໂຄງການອັນນີ້ຄຸ້ມກັນບຸກຄົນຜູ້ທີ່ມີການຖືພາຕັ້ງທ້ອງຈົບລົງໃນ 12 ເດືອນຜ່ານມາ.ຮຽນຮູ້ເພີ້ມເຕີມໄດ້ທ **hca.wa.gov/apc**.
- ຮັກສາຄຳຮ້ອງຂອງທ່ານໃຫ້ທັນກັບສະພາບການໂດຍການລາຍງານການປ່ຽນແປງພາຍໃນ 30 ວັນ,ລວມທັງເວລາການຖືພາຕັ້ງທ້ອງຈົບລົງ

### ການວາງແຜນຄອບຄົວເທົ່ານັ້ນ

ໂຄງການອັນນີ້ເອົາການຄຸ້ມກັນໃຫ້ບຸກຄົນສຳລັບການບໍລິການວາງແຜນຄອບຄົວ. ຮຽນຮູ້ເພີ້ມເຕີມໄດ້ທີ່ **hca.wa.gov/family-planning.**



# ຜູ້ໃຫ້ຄວາມຊ່ວຍເຫລືອສຸຂະພາບການປະພຶດ

ຜູ້ໃຫ້ຄວາມຊ່ວຍເຫລືອສຸຂະພາບການປະພຶດແມ່ນບຸກຄົນ ຜູ້ທີ່ມີໄວ້ໃຫ້ເພື່ອຈະເອົາຄວາມຊ່ວຍເຫລືອຟຣີແລະເປັນ ຄວາມລັບທີ່ແກ້ໄຂຄວາມຂ້ອງໃຈກ່ຽວພັນນຳການບໍຣິ ການສຸຂະພາບການປະພຶດຂອງທ່ານ.ເຂົາເຈົ້າສາມາດ ຊ່ວຍເຫລືອຖ້າຫາກວ່າທ່ານມີຄວາມຂ້ອງໃຈໃນສຸຂະ ພາບການປະພຶດ,ການອຸທອນ,ຫລືການຟັງເຣື່ອງຈາກ ອຳນາດການປົກຄອງເພື່ອຈະແກ້ໄຂຄວາມຂ້ອງໃຈຂອງ ທ່ານ. ຜູ້ໃຫ້ຄວາມຊ່ວຍເຫລືອສຸຂະພາບການປະພຶດແມ່ນ ບໍ່ຂຶ້ນນຳແຜນການສຸຂະພາບຂອງທ່ານຫລື Behavioral Health Administrative Services Organization (BH-ASO).

ຕິດຕໍ່ຫາທຸກໆທ້ອງຖິ່ນໄດ້ທີ່ເລກ 1-800-366-3103. ຫລືສົ່ງອີເມລ໌ຫາ Office of Behavioral Health Advocacy ໄດ້ທີ່ **info@obhadvocacy.org**

| ທ້ອງຖິ່ນ | °າວຕີ | ອີເມລ໌ | ເລກໂທລະສັບ |
|---|---|---|---|
| Great Rivers | Cowlitz, Grays Harbor, Lewis, Pacific, Wahkiakum | **greatrivers@obhadvocacy.org** | 360-561-2257 |
| Greater Columbia | Asotin, Benton, Columbia, Franklin, Garfield, Kittitas, Walla Walla, Whitman, Yakima | **greatercolumbia@obhadvocacy.org** | 509-808-9790 |
| King | King | **kingcounty@obhadvocacy.org** | 206-265-1399 |
| North Central | Chelan, Douglas, Grant, Okanogan | **northcentral@obhadvocacy.org** | 509-389-4485 |
| North Sound | Island, San Juan, Skagit, Snohomish, Whatcom | **northsound@obhadvocacy.org** | 360-528-1799 |
| Pierce | Pierce | **piercecounty@obhadvocacy.org** | 253-304-7355 |
| Salish | Clallam, Jefferson, Kitsap | **salish@obhadvocacy.org** | 360-481-6561 |
| Spokane | Adams, Ferry, Lincoln, Pend Oreille, Spokane, Stevens | **spokaneregion@obhadvocacy.org** | 509-655-2839 |
| Southwest | Clark, Klickitat, Skamania | **southwestern@obhadvocacy.org** | 509-434-4951 |
| Thurston-Mason | Mason, Thurston | **thurstonmason@obhadvocacy.org** | 360-489-7505 |



## ການປິ່ນປົວທີ່ຖືກຄຸ້ມກັນໂດຍການຄຸ້ມກັນ **Apple Health** ໂດຍປາສຈາກໂຄງການປິ່ນປົວທີ່ຖືກຄວບຄຸມນຳ

ການຄຸ້ມກັນ Apple Health ໂດຍປາສຈາກໂຄງການປິ່ນປົວທີ່ຖືກຄວບຄຸມນຳ (ຍັງເປັນທີ່ຮູ້ຈັກກັນອີກວ່າແມ່ນການປິ່ນປົວ fee-for-service) ກວມເອົາສະວັດດີການ ແລະ ການປິ່ນປົວບາງຢ່າງເຖິງແມ່ນວ່າທ່ານຈະໄດ້ຈົດຊື່ເຂົ້າໃນໂຄງການປິ່ນປົວສຸຂະພາບທີ່ຖືກຄວບຄຸມນຳຂອງ Apple Health ຢູ່ກໍຕາມ. ສະວັດດີການເຫລົ່ານີ້ບາງ ຢ່າງລວມເອົາ:

- ການບໍລິການປິ່ນປົວຣະຍະຍາວ.
- ການບໍລິການປິ່ນປົວສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ.
- ການປິ່ນປົວແຂ້ວ.
- ແວ່ນຕາ ແລະ ການສວມໃສ່ແວ່ນຕາສຳລັບເດັກນ້ອຍ (ຕ່ຳກວ່າ 21 ປີ).
- ການບໍລິການອູ້ມຊູນຳການຖືພາຕັ້ງທ້ອງ, ການປຶກສາກ່ອນກຳເນີດລູກ, ແລະ ການສິ້ນສຸດການຖືພາຕັ້ງທ້ອງ.

ຖ້າຫາກວ່າທ່ານມີຄຳຖາມແນວໃດກ່ຽວກັບສະວັດດີການ ຫລື ການບໍລິການປິ່ນປົວທີ່ບໍ່ຖືກບົ່ງຢູ່ໃນທີ່ນີ້, ໂທຫາພະແນກປະຊາສັມພັນຂອງໂຄງການ Apple Health ໄດ້ທີ່ເລກ 1-800-562-3022.

## ການບໍລິການທີ່ທ່ານຈະຕ້ອງການເພື່ອຈະເຂົ້າເຖິງການປິ່ນປົວສຸຂະພາບ

### ຖ້າຫາກວ່າທ່ານມີຄວາມເສັຽອົງຄະ

ຖ້າຫາກວ່າທ່ານມີຄວາມເສັຽອົງຄະນຳການປາກເວົ້າ ຫລື ການຟັງສຽງ ຫລື ບັນຫາເຣື່ອງການເຄື່ອນທີ່ໄປມາ, ທ່ານຄວນຈະບອກຜູ້ຕ້ອນຮັບແຂກເມື່ອເວລາທ່ານເຮັດຫມາຍນັດພົບຂອງທ່ານ. ຜູ້ຕ້ອນຮັບແຂກຈະຊ່ວຍທ່ານທຳການຈັດຫາທີ່ຈຳເປັນ ທຸກໆຢ່າງ.

### ທ່ານອາດຈະຕ້ອງການນາຍແປພາສາ

ຖ້າພາສາອັງກິດບໍ່ແມ່ນພາສາທີ່ທ່ານມັກກວ່າ, ຫູຫນວກຕາບອດ, ຫລື ຍາກທີ່ຈະຟັງສຽງ. ນາຍແປພາສາຜູ້ຊ່ຽວຊານຈະມີໄວ້ໃຫ້ໃນຫລາຍໆພາສາ, ລວມທັງພາສາໃບ້, ໂດຍບໍ່ຄິດຄ່ານຳທ່ານ. ເມື່ອເວລາທ່ານເຮັດຫມາຍນັດພົບການປິ່ນປົວສຸຂະພາບ, ບອກໃຫ້ຜູ້ຕ້ອນຮັບແຂກຮູ້ຈັກຖ້າຫາກວ່າທ່ານຕ້ອງການນາຍແປພາສາ. ນາຍແປພາສາປາກເວົ້າສາມາດໄປຫ້ອງການຂອງທ່ານຫມໍ, ຢູ່ທາງວີດີໂອ, ຫລື ຢູ່ທາງໂທຣະສັບໃນຣະຫວ່າງຫມາຍນັດພົບ ຂອງທ່ານ. ນາຍແປພາສາໃບ້ ສາມາດໄປຫ້ອງການຂອງທ່ານຫມໍ, ຫລື ຢູ່ທາງວີດີໂອໃນຣະຫວ່າງຫມາຍນັດພົບຂອງທ່ານ.

ມັນຈະເປັນການດີກວ່າທີ່ຈະໃຊ້ນາຍແປພາສາທີ່ຊ່ຽວຊານຄົນນຶ່ງແທນທີ່ວ່າຈະພາເອົາສະມາຊິກຄອບຄົວ ຫລື ຫມູ່ເພື່ອນມານຳເພື່ອຈະແປພາສາໃຫ້ທ່ານ. ນາຍແປພາສາໄດ້ຖືກຝຶກຝົນມາເພື່ອຈະເຂົ້າໃຈຄຳສັບຂອງການປິ່ນປົວສຸຂະພາບ. ເຂົາເຈົ້າຈະຊ່ວຍເຫລືອທ່ານ ແລະ ຜູ້ໃຫ້ການປິ່ນປົວຂອງທ່ານເຂົ້າໃຈກັນ ແລະ ກັນ. ຮຽນຮູ້ເພີ້ມເຕີມຢູ່ທີ່ **hca.wa.gov/interpreter-services**.

### ທ່ານສາມາດໄດ້ຮັບຄວາມຊ່ວຍເຫລືອນຳການຂົນສົ່ງໄປມາ

ທ່ານຈະມີເງື່ອນໄຂໄດ້ຮັບວາມຊ່ວຍເຫລືອນຳການຂົນສົ່ງເດີນທາງໄປຫາຫມາຍນັດພົບການປິ່ນປົວສຸຂະພາບຂອງທ່ານໂດຍບໍ່ໄດ້ຄ່າແນວໃດຈາກທ່ານ. ຫມາຍນັດພົບຕ້ອງແມ່ນສຳລັບການບໍຣິ ການປິ່ນປົວທີ່ຖືກຸ້ມກັນໂດຍ Apple Health. ຊະນິດຂອງການຂົນສົ່ງເດີນທາງທົ່ວໄປທີ່ສຸດທີ່ມີໄວ້ໃຫ້ລວມເອົາ: ຣົດເມປະຈຳທາງ, ບັດແລກປ່ຽນເອົານ້ຳມັນ, ການຈ່າຍເງິນຄືນສຳລັບຣະຍະທາງຂອງຜູ້ຮັບ ແລະ ຜູ້ອາສາສະມັກ, ຄົນຂັບຣົດອາສະສະມັກ, ຣົດແທກຊີ,ຣົດແວນໃສ່ຕັ່ງນັ່ງຊຸກເອົາ ຫລື ຍານພາຫະນະທີ່ເຂົ້າໄດ້, ແລະ ຣົດເມການຄ້າ ແລະ ທາງອາກາດ. ລາຍຊື່ຂອງນາຍຫນ້າສາມາດຖືກພົບເຫັນໄດ້ຢູ່ທີ່ **hca.wa.gov/transportation-help**.



Washington Apple Health

# ບັດລາຍງານຂອງໂຄງການ **2024 Washington Apple Health**

ບັດລາຍງານໃບນີ້ສະແດງໃຫ້ເຫັນວ່າໂຄງການ Washington Apple Health ປຽບທຽບໃສ່ກັນແລະກັນແນວໃດໃນເຣື່ອງການປະຕິບັດງານ.ທ່ານສາມາດໃຊ້ບັດລາຍງານໃບນີ້ເພື່ອຈະຊ່ວຍຊີ້ນຳການເລືອກເອົາໂຄງການຂອງທ່ານທີ່ໃຊ້ໄດ້ດີທີ່ສຸດສຳລັບທ່ານ.

| ຂະແນງຂອງ ການປະຕິບັດງານ | Coordinated Care | Community Health Plan of Washington | Molina Healthcare of Washington | UnitedHealthcare | Wellpoint (ເປັນທີ່ຮູ້ຈັກກັນມາກ່ອນ Amerigroup) |
|---|---|---|---|---|---|
| ການໄດ້ຮັບການປິ່ນປົວ | ★☆☆ | ★★☆ | ★★☆ | ★★☆ | ★☆☆ |
| ການຮັກສາເດັກນ້ອຍໃຫ້ແຂງແຮງ | ★★☆ | ★★☆ | ★★☆ | ★☆☆ | ★☆☆ |
| ການຮັກສາຜູ້ຍິງ ແລະ ແມ່ໃຫ້ແຂງແຮງ | ★★☆ | ★★☆ | ★★★ | ★☆☆ | ★☆☆ |
| ການປ້ອງກັນ ແລະ ການຄວບຄຸມການເຈັບປ່ວຍ | ★☆☆ | ★☆☆ | ★★☆ | ★★☆ | ★★☆ |
| ການຮັບປະກັນການປິ່ນປົວທີ່ເຫມາະສົມ | ★★★ | ★★☆ | ★☆☆ | ★☆☆ | ★☆☆ |
| ຄວາມເພິ່ງພໍໃຈໃນການປິ່ນປົວທີ່ຖືກເອົາໃຫ້ເດັກນ້ອຍ | ★★☆ | ★★☆ | ★★☆ | ★★☆ | ★★☆ |
| ຄວາມເພິ່ງພໍໃຈນຳໂຄງການສຳລັບເດັກນ້ອຍ | ★★☆ | ★★☆ | ★★☆ | ★★☆ | ★★☆ |

| **ກຸນແຈ:** ການປະຕິບັດງານປຽບທຽບໃສ່ໂຄງການ Apple Health ທຸກໆໂຄງການ | |
|---|---|
| ສູງກວ່າປານກາງ | ★★★ |
| ປານກາງ | ★★☆ |
| ຕ່ຳກວ່າປານກາງ | ★☆☆ |

*ການໃຫ້ຄະແນນເຫລົ່ານີ້ໄດ້ຖືກອີງໃສ່ຣາຍຣະອຽດທີ່ຖືກເກັບກຳມາຈາກໂຄງການປິ່ນປົວສຸຂະພາບແລະການສຳຣວດຂອງສະມາຊິກຂອງໂຄງການ ປິ່ນປົວສຸຂະພາບໃນປີ 2023. (ຂໍ້ມູນບາງຢ່າງທີ່ຖືກໃຊ້ຢູ່ໃນຂະແນງ Getting Care ແມ່ນມາຈາກປີ 2022).*

*ຣາຍຣະອຽດໄດ້ຖືກກວດເບິ່ງ ຄືນເພື່ອຄວາມຖືກຕ້ອງແນ່ນອນໂດຍຜູ້ກວດກາທີ່ບໍ່ຂື້ນນຳໃຜ.*

*ຄະແນນຂອງການປະຕິບັດງານຂອງໂຄງການສຸຂະພາບຈະບໍ່ຖືກດັດແປງແກ້ໄຂສຳລັບຄວາມແຕກຕ່າງໃນ ປະຊາຊົນສະມາຊິກຂອງເຂົາເຈົ້າຫລືໂຊງເຂດຂອງການບໍຣິການ.*

## ການຕີຄວາມຫມາຍຂອງຂະແນງຂອງການປະຕິບັດງານ

### ການໄດ້ຮັບການປິ່ນປົວ

- ສະມາຊິກມີການເຂົ້າເຖິງທ່ານຫມໍ
- ສະມາຊິກລາຍງານວ່າເຂົາເຈົ້າໄດ້ຮັບການປິ່ນປົວທີ່ເຂົາເຈົ້າຕ້ອງການ, ເມື່ອເວລາເຂົາເຈົ້າຕ້ອງການມັນ

### ການຮັກສາເດັກນ້ອຍໃຫ້ແຂງແຮງ

- ເດັກນ້ອຍຢູ່ໃນໂຄງການໄດ້ຮັບການກວດສຸຂະພາບປະຈຳ
- ເດັກນ້ອຍໄດ້ຮັບການສັກຢາກັນໂຣກທີ່ສຳຄັນ
- ເດັກນ້ອຍໄດ້ຮັບຣະດັບຂອງການປິ່ນປົວທີ່ເຫມາະສົມເມື່ອເວລາເຂົາເຈົ້າເຈັບປ່ວຍ

### ການຮັກສາຜູ້ຍິງ ແລະ ແມ່ໃຫ້ແຂງແຮງ

- ຜູ້ຍິງໄດ້ຮັບການກັ່ນກອງສຸຂະພາບທີ່ສຳຄັນ,ເຊັ່ນວ່າການກວດກັ່ນກອງເບິ່ງມະເລງໃນຊ່ອງຄອດ
- ແມ່ລົມໃຫມ່ ແລະ ແມ່ຜູ້ທີ່ກຳລັງຈະຄອດລູກໄດ້ຮັບການປິ່ນປົວທີ່ເຂົາເຈົ້າຕ້ອງການ

### ການປ້ອງກັນ ແລະ ການຄວບຄຸມການເຈັບປ່ວຍ

- ໂຄງການຊ່ວຍເຫລືອສະມາຊິກຂອງເຂົາເຈົ້າໃຫ້ຮັກສາການເຈັບປ່ວຍທີ່ຍືດເຍື້ອຍາວນານໃຫ້ຢູ່ພາຍໄຕ້ຄວາມຄວບຄຸມ,
- ເຊັ່ນວ່າໂຣກຫືດ, ຄວາມດັນຂອງເລືອດສູງ ຫລື ໂຣກເບົາຫວານໂຄງການຊ່ວຍເຫລືອປ້ອງກັນການເຈັບປ່ວຍດ້ວຍການກວດກັ່ນກອງເບິ່ງ ແລະ ການປິ່ນປົວທີ່ເຫມາະສົມ

### ການຮັບປະກັນການປິ່ນປົວທີ່ເຫມາະສົມ

- ສະມາຊິກຈະໄດ້ຮັບການເບິ່ງແຍງດູແລ ແລະ ການປິ່ນປົວທີ່ເຫມາະສົມທີ່ສຸດສຳລັບສະພາບຂອງເຂົາເຈົ້າ

### ວາມເພິ່ງພໍໃຈໃນການປິ່ນປົວທີ່ຖືກເອົາໃຫ້ເດັກນ້ອຍ

- ສະມາຊິກລາຍງານຄະແນນສູງສຳລັບທ່ານຫມໍ,ຜູ້ຊ່ຽວຊານແລະການປິ່ນປົວສຸຂະພາບທົ່ວໄປ

### ວາມເພິ່ງພໍໃຈນຳໂຄງການສຳລັບເດັກນ້ອຍ

- ສະມາຊິກລາຍງານຄະແນນສູງສຳລັບການບໍຣິການຂອງໂຄງການແລະໂ ຄງການທົ່ວໄປ

## ສິດທິ ແລະ ຄວາມຮັບຜິດຊອບຂອງທ່ານ

ຕາມກົດໝາຍແລ້ວ, ທ່ານມີສິດທິກ່ຽວກັບການບໍລິການປິ່ນປົວສຸຂະພາບທີ່ທ່ານໄດ້ຮັບ, ແລະ ທ່ານຍັງມີຄວາມຮັບຜິດຊອບບາງຢ່າງອີກຄືກັນເພື່ອຈະຊ່ວຍຮັກສາ ແລະ ປັບປຸງສິ່ງເສີມສຸຂະພາບຂອງທ່ານໃຫ້ດີຂຶ້ນ ແລະ ຫລີກເວັ້ນຄ່າໃຊ້ຈ່າຍທີ່ບໍ່ຈໍາເປັນ. ມັນອາດຈະເປັນໄປໄດ້ທີ່ຈະເສັຽໂຄງການປິ່ນປົວສຸຂະພາບຂອງທ່ານໄປ. ອັນນີ້ອາດຈະເກີດຂຶ້ນໄດ້ຖ້າຫາກວ່າທ່ານບໍ່ຮັກສາໝາຍນັດພົບຫມໍຂອງທ່ານ, ບໍ່ຮ່ວມມືນໍາທ່ານຫມໍປິ່ນປົວປະຖົມພະຍາບານຂອງທ່ານ, ແລະ ເຫດຜົນອື່ນໆ. ກະຣຸນາຕິດຕໍ່ມາຫາພວກເຮົາຖ້າຫາກວ່າທ່ານຢາກໄດ້ຣາຍຣະອຽດເພີ້ມເຕີມ.

### ທ່ານມີສິດທິທີ່ຈະ:

- ຊ່ວຍທໍາການຕັດສິນໃຈກ່ຽວກັບການປິ່ນປົວສຸຂະພາບຂອງທ່ານ, ລວມທັງການປະຕິເສດການປິ່ນປົວ.
- ຖືກແຈ້ງບອກກ່ຽວກັບທາງເລືອກຕ່າງໆໃນການປິ່ນປົວທັງໝົດທີ່ມີໃວ້ໃຫ້, ບໍ່ວ່າຈະເປັນມູນຄ່າເທົ່າໃດກໍ່ຕາມ.
- ໄດ້ຮັບທັສນະທີສອງຈາກຜູ້ໃຫ້ການພະຍາບານຄົນອື່ນໃນໂຄງການປິ່ນປົວສຸຂະພາບຂອງທ່ານ.
- ໄດ້ຮັບການບໍຣິການປິ່ນປົວທີ່ບໍ່ຕ້ອງໄດ້ລໍຖ້າດົນເກີນໄປ.
- ຖືກເຮັດນໍາດ້ວຍຄວາມນັບຖື ແລະ ກຽດສັກສີ. ການແບ່ງແຍກຊົນຊັ້ນວັນນະບໍ່ອະນຸຍາດໃຫ້ມີ. ຈະບໍ່ມີໃຜຈະຖືກເຮັດນໍາແຕກຕ່າງ ຫລື ບໍ່ຍຸຕິທັມຍ້ອນວ່າຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ເພດ, ຄວາມຊອບໃຈທາງເພດ, ອາຍຸ, ສາສະນາ, ລັດທິ ຫລື ຄວາມເສັຽອົງຄະຂອງເຂົາເຈົ້າ.
- ເວົ້າອອກມາໄດ້ຢ່າງເສຣີກ່ຽວກັບການປິ່ນປົວສຸຂະພາບຂອງທ່ານ ແລະ ຄວາມຂ້ອງໃຈໂດຍບໍ່ມີຜົນຮ້າຍຕ່າງໆແຕ່ຢ່າງໃດ.
- ໃຫ້ສິດທິສ່ວນຕົວຂອງທ່ານຖືກປົກປ້ອງໄວ້ ແລະ ໃຫ້ຣາຍຣະອຽດກ່ຽວກັບການປິ່ນປົວຂອງທ່ານປົກປິດໃວ້ເປັນຄວາມລັບ.
- ຖາມເອົາ ແລະ ໄດ້ຮັບໃບໂກປີ້ຂອງບັນທຶກພະຍາບານຂອງທ່ານ.
- ຖາມເອົາ ແລະ ໃຫ້ມີການດັດແປງເຮັດໃສ່ບັນທຶກພະຍາບານຂອງທ່ານເມື່ອຕ້ອງການ.
- ຖາມເອົາ ແລະ ໄດ້ຮັບຣາຍຣະອຽດກ່ຽວກັບ:
  - » ການປິ່ນປົວສຸຂະພາບ ແລະ ການປິ່ນປົວທີ່ຖືກຄຸ້ມກັນຂອງທ່ານ.
  - » ຜູ້ໃຫ້ການປິ່ນປົວຂອງທ່ານ ແລະ ການສົ່ງຕໍ່ໄດ້ຖືກເຮັດແນວໃດໄປຫາຜູ້ຊ່ຽວຊານ ແລະ ຜູ້ໃຫ້ການພະຍາບານອື່ນໆ.
  - » ໂຄງການປິ່ນປົວສຸຂະພາບຈ່າຍເງິນໃຫ້ຜູ້ໃຫ້ການປິ່ນປົວຂອງທ່ານແນວໃດສໍາລັບການປິ່ນປົວສຸຂະພາບຮ່າງກາຍ ແລະ ການປະພຶດຂອງທ່ານ.
  - » ທາງເລືອກທຸກໆຢ່າງສໍາລັບການປິ່ນປົວ ແລະ ເປັນຫຍັງທ່ານຈຶ່ງໄດ້ຮັບຊະນິດການປິ່ນປົວແນວໃດແນວນຶ່ງສະເພາະ.
  - » ຈະໄດ້ຮັບຄວາມຊ່ວຍເຫລືອແນວໃດນໍາການຍື່ນຄໍາຮ້ອງທຸກ ຫລື ຄວາມບໍ່ພໍໃຈກ່ຽວກັບການປິ່ນປົວຂອງທ່ານ.
  - » ໂຄງຮ່າງການຈັດຕັ້ງຂອງໂຄງການປິ່ນປົວສຸຂະພາບຂອງທ່ານລວມທັງນະໂຍບາຍ ແລະ ຣະບຽບການ, ຄໍາຊີ້ນໍາການປະຕິບັດ, ແລະ ຈະແນະນໍາການປ່ຽນແປງໄດ້ຢ່າງໃດ.
- ໄດ້ຮັບສິດທິ ແລະ ຄວາມຮັບຜິດຊອບຂອງສະມາຊິກຢ່າງໜ້ອຍແຕ່ລະປີ. ສິດທິຂອງທ່ານລວມເອົາການບໍຣິການປິ່ນປົວສຸຂະພາບໂຣກຈິດ ແລະ ການປິ່ນປົວຢາເສບຕິດ.
- ໄດ້ຮັບລາຍຊື່ຂອງເລກໂທຣະສັບສໍາລັບພາວະສຸກເສີນ.
- ໄດ້ຮັບຄວາມຊ່ວຍເຫລືອໃນການຂຽນປະກອບໃບຟອມຄໍາຊີ້ນໍາແນວທາງລ່ວງຫນ້າຂອງສຸຂະພາບໂຣກຈິດ ແລະ ການພະຍາບານ.

### ທ່ານມີຄວາມຮັບຜິດຊອບທີ່ຈະ:

- ຊ່ວຍທໍາການຕັດສິນໃຈກ່ຽວກັບການປິ່ນປົວສຸຂະພາບຂອງທ່ານ, ລວມທັງການປະຕິເສດການປິ່ນປົວ.
- ຮັກສາການນັດໝາຍຕ່າງໆ ແລະ ໄປຕົງເວລາ. ໃຫ້ໂທຫາຫ້ອງການຂອງຜູ້ໃຫ້ການປິ່ນປົວຂອງທ່ານຖ້າທ່ານຈະມາຮອດຊ້າ ຫລື ຖ້າຫາກວ່າທ່ານຕ້ອງໄດ້ຍົກເລີກໝາຍນັດ.
- ເອົາໃຫ້ຜູ້ໃຫ້ການປິ່ນປົວຂອງທ່ານຣາຍຣະອຽດທີ່ເຂົາເຈົ້າຕ້ອງການເພື່ອຈະຖືກຈ່າຍເງິນໃຫ້ສໍາລັບການບໍຣິການປິ່ນປົວໃຫ້ແກ່ທ່ານ.
- ສະແດງຄວາມນັບຖືຕໍ່ຜູ້ໃຫ້ການພະຍາບານຂອງທ່ານໃຫ້ຄືກັນກັບທີ່ທ່ານຕ້ອງການຈາກເຂົາເຈົ້າ.
- ຖືເອົາບັດ services card ແລະ ບັດ ID ໂຄງການປິ່ນປົວສຸຂະພາບຂອງທ່ານມານໍາໃນເວລາໝາຍນັດພົບຂອງທ່ານທຸກໆເທື່ອ.
- ຮຽນຮູ້ກ່ຽວກັບໂຄງການປິ່ນປົວສຸຂະພາບຂອງທ່ານ ແລະ ການບໍຣິການແນວໃດແດ່ທີ່ຖືກຄຸ້ມກັນ.
- ໃຊ້ການປິ່ນປົວສຸຂະພາບເມື່ອເວລາທ່ານຕ້ອງການ.
- ຮູ້ຈັກບັນຫາສຸຂະພາບຂອງທ່ານ ແລະ ມີສ່ວນນໍາໃນການເຮັດເປົ້າໝາຍການປິ່ນປົວທີ່ຖືກຕົກລົງເຫັນພ້ອມນໍາກັນຫລາຍເທົ່າທີ່ຈະເປັນໄປໄດ້.
- ເອົາຣາຍຣະອຽດອັນຄົບຖ້ວນໃຫ້ຜູ້ໃຫ້ການປິ່ນປົວ ແລະ ໂຄງການປິ່ນປົວສຸຂະພາບຂອງທ່ານກ່ຽວກັບສຸຂະພາບຂອງທ່ານເພື່ອວ່າທ່ານຈະສາມາດໄດ້ຮັບການປິ່ນປົວທີ່ທ່ານຕ້ອງການ.
- ປະຕິບັດຕາມຄໍາຊີ້ນໍາຂອງຜູ້ໃຫ້ການພະຍາບານຂອງທ່ານສໍາລັບການປິ່ນປົວທີ່ທ່ານໄດ້ຕົກລົງເຫັນພ້ອມນໍາ.
- ໃຊ້ການປິ່ນປົວສຸຂະພາບຢ່າງເຫມາະສົມ. ຖ້າຫາກວ່າທ່ານບໍ່ເຮັດ, ທ່ານຈະຖືກຈົດຊື່ເຂົ້າໃນໂຄງການ Patient Review and Coordination ການກວດເບິ່ງຄືນ ແລະ ການປະສານງານສໍາລັບຄົນເຈັບ) .ຢູ່ໃນໂຄງການອັນນີ້, ທ່ານຈະຖືກແຕ່ງຕັ້ງໃສ່ຜູ້ໃຫ້ການປະຖົມພະຍາບານຄົນນຶ່ງ, ຮ້ານຂາຍຢາບ່ອນນຶ່ງ, ຜູ້ອອກໃບສັ່ງຊື້ຢາສໍາລັບ ຄວບຄຸມຢາເສບຕິດຄົນນຶ່ງ, ແລະ ໂຮງພະຍາບານບ່ອນນຶ່ງສໍາລັບການປິ່ນປົວທີ່ບໍ່ແມ່ນສຸກເສີນ. ທ່ານຍັງຈະຢູ່ໃນໂຄງການອັນດຽວກັນຂອງທ່ານຢູ່ເປັນເວລາຢ່າງຫນ້ອຍ12 ເດືອນ.
- ແຈ້ງບອກພວກເຮົາໂດຍທັນທີໂລດຖ້າຫາກວ່າມີການປ່ຽນແປງໃນຂະນາດຂອງຄອບຄົວຂອງທ່ານ (ເຊັ່ນວ່າການຖືພາຕັ້ງທ້ອງ, ການເກີດລູກ, ການຮັບເອົາມາເປັນລູກບຸນທັມ) ຫລື ສະພາບການຂອງທ່ານປ່ຽນແປງ (ເຊັ່ນວ່າທີ່ຢູ່ບ່ອນໃຫມ່, ການປ່ຽນແປງໃນຣາຍໄດ້, ການກາຍເປັນມີເງື່ອນໄຂໄດ້ຮັບເມດີແຄຣ໌ ຫລື ປະປັນພັຍແນວ ອື່ນ) .
- ທວນຄືນຕໍ່ໃຫມ່ການຄຸ້ມກັນຂອງທ່ານແຕ່ລະປີໂດຍການໃຊ້ແວບໄຊທ໌ຂອງ WashingtonHealthplanfinder ຢູ່ທີ່ **wahealthplanfinder.org**. ທ່ານຍັງຈະໃຊ້ແວບໄຊທ໌ນີ້ໄດ້ອີກຄືກັນເພື່ອຈະລາຍງານການປ່ຽນແປງຕໍ່ບັນຊີຂອງທ່ານ.

## ຖ້າຫາກວ່າທ່ານບໍ່ດີໃຈນໍາໂຄງການປິ່ນປົວສຸຂະພາບຂອງທ່ານເດ

ທ່ານ ຫລື ຜູ້ຕາງຫນ້າທີ່ຖືກອະນຸຍາດຂອງທ່ານມີສິດທີ່ຈະຍື່ນຄໍາຮ້ອງທຸກ. ຄໍາຮ້ອງທຸກແມ່ນການບໍ່ພໍໃຈທາງປາກເປົ່າ ຫລື ລາຍລັກອັກສອນກ່ຽວກັບຄຸນນະພາບຂອງການປິ່ນປົວຂອງທ່ານ ຫລື ທ່ານໄດ້ຖືກເຮັດນໍາແນວໃດໂດຍທ່ານຫມໍ ຫລື ໂຄງການສຸຂະພາບຂອງທ່ານ. ເມື່ອເວລາທ່ານໄດ້ຍື່ນຄໍາຮ້ອງທຸກແລ້ວ:

- ໂຄງການປິ່ນປົວສຸຂະພາບຂອງທ່ານຕ້ອງບອກໃຫ້ທ່ານຮູ້ຈັກ ທາງໂທຣະສັບ ຫລື ທາງຫນັງສືວ່າເຂົາເຈົ້າໄດ້ຮັບຄວາມບໍ່ພໍໃຈຂອງທ່ານພາຍໃນສອງວັດທໍາເນີນການການ.
- ຄວາມຂ້ອງໃຈຂອງທ່ານຕ້ອງຖືກແກ້ໄຂໂດຍໄວເທົ່າທີ່ອາດຈະເປັນໄປໄດ້, ໂດຍບໍ່ໃຊ້ເວລານານເກີນກວ່າ 45 ວັນ ຕາມປະຕິທິນ.

*ໂຄງການປິ່ນປົວສຸຂະພາບຂອງທ່ານຕ້ອງຊ່ວຍເຫລືອທ່ານຍື່ນຄໍາຮ້ອງທຸກ.*

## ຖ້າຫາກວ່າທ່ານບໍ່ດີໃຈນຳໂຄງການປິ່ນປົວສຸຂະພາບຂອງທ່ານເດ

ທ່ານຫລືຜູ້ຕາງຫນ້າທີ່ຖືກແຕ່ງຕັ້ງຂອງທ່ານມີສິດທີ່ຈະຍື່ນການອຸທອນທາງປາກເປົ່າຫລືທາງຫນັງສືພາຍໃນຫົກສິບ(60)ວັນຕາມປະຕິທິນ. ຄຳຮ້ອງທຸກແມ່ນການບໍ່ພໍໃຈທາງປາກເປົ່າ ຫລື ລາຍລັກອັກສອນກ່ຽວກັບຄຸນນະພາບຂອງການປິ່ນປົວຂອງທ່ານ ຫລື ທ່ານ ໄດ້ຖືກເຮັດນຳແນວໃດໂດຍທ່ານຫມໍ ຫລື ໂຄງການສຸຂະພາບຂອງ ທ່ານ. ເມື່ອເວລາທ່ານໄດ້ຍື່ນຄຳຮ້ອງທຸກແລ້ວ:

- ໂຄງການປິ່ນປົວສຸຂະພາບຂອງທ່ານຕ້ອງບອກໃຫ້ທ່ານຮູ້ຈັກທາງໂທຣະສັບ ຫລືທາງຫນັງສືວ່າເຂົາເຈົ້າໄດ້ຮັບຄວາມບໍ່ພໍໃຈຂອງທ່ານພາຍໃນສອງວັນເຮັດການ.
- ໂຄງການປິ່ນປົວສຸຂະພາບຂອງທ່ານຕ້ອງບອກໃຫ້ທ່ານຮູ້ຈັກໂດຍທາງຫນັງສືພາຍໃນ 5 ວັນ ຕາມປະຕິທິນ ທີ່ເຂົາເຈົ້າໄດ້ຮັບຄຳອຸທອນຂອງທ່ານ.
- ຄວາມຂ້ອງໃຈຂອງທ່ານຕ້ອງຖືກແກ້ໄຂໂດຍໄວເທົ່າທີ່ອາດຈະເປັນໄປໄດ້, ໂດຍບໍ່ໃຊ້ເວລານານເກີນກວ່າ 28 ວັນຕາມປະຕິທິນ.

*ໂຄງການປິ່ນປົວສຸຂະພາບຂອງທ່ານຕ້ອງເອົາໃຫ້ທ່ານໃບຫນັງສືແຈ້ງການກ່ຽວກັບຄຳຕັດສິນຂອງເຂົາເຈົ້າ ແລະ ຊ່ວຍເຫລືອທ່ານຍື່ນຄຳອຸທອນ.*

***ມັນເປັນເຣື່ອງຮີບດ່ວນບໍ່ ?*** ຖ້າຫາກວ່າທ່ານຂໍອຸທອນຄຳຕັດສິນ ແລະ ມີສະພາບພະຍາບານຮ່າງກາຍ ຫລື ການປະພຶດຮີບດ່ວນ, ທ່ານ ຫລື ທ່ານຫມໍຂອງທ່ານສາມາດຮ້ອງຂໍເອົາການກວດເບິ່ງຄືນ ຫລື ການຟັງເຣື່ອງເລັ່ງລັດ (ໄວ) ໄດ້. ຖ້າຫາກວ່າສະພາບພະຍາບານຂອງທ່ານຕ້ອງການ , ຄຳຕັດສິນຈະຖືກເຮັດລົງໄປກ່ຽວກັບການປິ່ນປົວຂອງທ່ານພາຍໃນສາມວັນຕາມປະຕິທິນ. ເບິ່ງໃສ່ປື້ມຄູ່ມືສະວັດດີການພະຍາບານຂອງທ່ານເພື່ອລາຍລະອຽດອັນຖ້ວນຖີ່ເພີ້ມເຕີມກ່ຽວກັບຂັ້ນຕອນເຫລົ່ານີ້.

## ຫມາຍເຫດກ່ຽວກັບຄວາມລັບສ່ວນຕົວ

ບັດບໍຣິການ services card ຂອງທ່ານບໍ່ໄດ້ບັນຈຸຣາຍລະອຽດສ່ວນຕົວແນວໃດຍົກເວັ້ນແຕ່ຊື່ຂອງທ່ານ, ເລກ ProviderOneຂອງທ່ານ, ແລະ ວັນທີທີ່ບັດຖືກເຮັດອອກ. ອັນນີ້ຮັກສາຄວາມລັບສ່ວນຕົວຂອງທ່ານໄວ້ ຖ້າຫາກວ່າບັດຂອງທ່ານຖືກສູນເສັຽໄປ ຫລື ຂີ້ລັກໄປ. ບໍ່ມີໃຜ ບໍ່ວ່າຈະແມ່ນ Health Care Authority (HCA), ຜູ້ບໍຣິຫານຂອງ Apple Health, ຫລື ໂຄງການປິ່ນປົວສຸຂະພາບຂອງທ່ານຈະຕິດຕໍ່ໄປຫາທ່ານຈັກເທື່ອໂດຍກົງໂລດເພື່ອຈະຖາມເອົາລາຍລະອຽດສ່ວນຕົວຂອງທ່ານເພື່ອຈະເອົາ ຫລື ເຮັດແທນບັດບໍຣິການ services card. ຢ່າສູ່ບອກລາຍລະອຽດສ່ວນຕົວຂອງທ່ານຈັກເທື່ອ, ເຊັ່ນວ່າເລກຄວາມປອດພັຍຂອງສັງຄົມ, ໃຫ້ຄົນໃດຄົນນຶ່ງຜູ້ທີ່ໂທຫາທ່ານ ຫລື ສົ່ງອີແມລ໌ໃຫ້ທ່ານເພື່ອຈະຖາມເອົາ.

ໂຄງການປິ່ນປົວສຸຂະພາບທຸກໆໂຄງການໄດ້ຖືກບົ່ງທີ່ຈະປົກປ້ອງລາຍລະອຽດກ່ຽວກັບສຸຂະພາບຂອງທ່ານ. ໂຄງການປິ່ນປົວສຸຂະພາບ ແລະ HCA ໃຊ້ ແລະ ແລກປ່ຽນລາຍລະອຽດກ່ຽວກັບສຸຂະພາບທີ່ຖືກປົກປ້ອງກ່ຽວກັບທ່ານເພື່ອຈະເອົາສະວັດດີການປິ່ນປົວສຸຂະພາບຂອງທ່ານໃຫ້ທ່ານ; ເພື່ອຈະທຳການປິ່ນປົວ, ການຈ່າຍເງິນ, ແລະ ການດຳເນີນງານການປິ່ນປົວສຸຂະພາບ; ແລະ ສຳລັບເຫດຜົນອື່ນໆທີ່ຖືກອະນຸຍາດໃຫ້ ແລະ ບົ່ງໄວ້ໃນກົດຫມາຍ. ໂຄງການປິ່ນປົວສຸຂະພາບ ແລະ HCA ມີຫນ້າທີ່ທີ່ຈະຮັກສາລາຍລະອຽດກ່ຽວກັບສຸຂະພາບຂອງທ່ານໄວ້ເປັນຄວາມລັບສ່ວນຕົວ.

ເພື່ອຈະອ່ານນະໂຍບາຍຄວາມລັບຂອງ HCA ໄປທີ່ **hca.wa.gov** ແລະ ພິມໃສ່ "privacy" ຢູ່ທາງລຸ່ມຂອງຫນ້ານີ້. ຖ້າຫາກວ່າທ່ານຢາກຈະອ່ານນະໂຍບາຍຄວາມລັບສ່ວນຕົວຂອງໂຄງການປິ່ນປົວສຸຂະພາບຂອງທ່ານ,ໂທຫາພະແນກປະຊາສັມພັນຂອງໂຄງການປິ່ນປົວສຸຂະພາບຂອງທ່ານ ຫລື ແວ່ເຂົ້າຢ້ຽມແວບໄຊທ໌ຂອງໂຄງການ

## ຈະໄດ້ຄໍາຕອບຕໍ່ຄໍາຖາມຂອງທ່ານຢູ່ໃສ

| ຖ້າຫາກວ່າທ່ານມີຄໍາຖາມແນວໃດກ່ຽວກັບ | ຊັບສິນ |
|---|---|
| • ການັມກັນ Washington Apple Health (Medicaid) ຂອງທ່ານ | • ອອນລາຍນ໌: **hca.wa.gov/apple-health** |
| • ການປ່ຽນໂຄງການປິ່ນ ປົວສຸຂະພາບ<br>• ເງື່ອນໄຂໄດ້ຮັບການບໍຣິການປິ່ນປົວສຸຂະພາບ<br>• ບັດບໍຣິການ services cards | • Apple Health Customer Service ໄດ້ທີ່ເລກ 1-800-562-3022 ຫລືສົ່ງຄໍາຖາມຂອງທ່າ **https://fortress.wa.gov/hca/p1contactus/**<br>• ທາງເຂົ້າຂອງລູກຄ້າ ProviderOne: **https://www.waproviderone.org/client** |
| • ການເລືອກເອົາຜູ້ໃຫ້ການປິ່ນປົວ<br>• ການບໍຣິການປິ່ນປົວທີ່ຖືກຄຸ້ມກັນ<br>• ການປິ່ນປົວພະຍາບານຂອງທ່ານ<br>• ໂຄງການປິ່ນ ປົວສຸຂະພາບການປະພຶດຂອງທ່ານ<br>• ການສົ່ງຕໍ່ໄປຫາຜູ້ຊ່ຽວຊານ<br>• ບັດໂ ງການປິ່ນປົວສຸຂະພາບ | ໂຄງການປິ່ນປົວສຸຂະພາບຂອງທ່ານ.<br>ເລກໂທຣະສັບຂອງໂຄງການປິ່ນປົວສຸຂະພາບຂອງທ່ານໄດ້ຖືກບົ່ງ ຢູ່ຫນ້າ 5 ຂອງປື້ມຄູ່ມືຫົວນີ້. |
| ການປ່ຽນແປງຕໍ່ບັນຊີຂອງທ່ານ, ເຊັ່ນວ່າ: ຣາຍໄດ້, ສະພາບແຕ່ງງານ, ການຖືພາຕັ້ງທ້ອງ, ການເກີດ, ຫລື ການຮັບເອົາໄປເປັນລູກບຸນທັມ. | **ການຄຸ້ມກັນສໍາລັບເດັກນ້ອຍ, ຜູ້ຍິງຖືພາຕັ້ງທ້ອງ, ຜູ້ໃຫຍ່ເປັນໂສດ, ແລະ ພໍ່ແມ່/ຜູ້ເບິ່ງແຍງດູແລ:**<br>• ອອນລາຍນ໌: **wahealthplanfinder.org** ຫລ<br>• ໂທຫາເລກ 1-855-923-4633 (ຜູ້ໃຊ TTY/TDD 1-855-627-9604)<br>**ການຄຸ້ມກັນສໍາລັບບຸກຄົນຜູ້ທີ່ອາຍຸແກ່, ຕາບອດ, ຫລື ເສັຽອົງຄະ ຫລື ຢູ່ໃນຄວາມຕ້ອງການການປິ່ນປົວຣະຍະຍາວ ແລະ ການອູ້ມຊູ:**<br>• ແວ່ເຂົ້າປັຽມຫ້ອງການບໍຣິການຊຸມນຸມຊົນ (CSO) ຂອງກົມ DSHS ຂອງທ່ານຫລື ໄປທີ່ Washington Connections **washingtonconnection.org** |

## ຂຽນຊື່ຂອງຜູ້ບໍຣິການຂອງທ່ານຢູ່ຂ້າງລຸ່ມນີ້, ເພື່ອວ່າທ່ານຈະມີຣາຍຣະອຽດໄວ້ຕຽມພ້ອມເມື່ອເວລາທ່ານໂທມາຂໍເອົາຄວາມຊ່ວຍເຫລືອ.

| | ຊື່ ແລະ ສະຖານທີ່ | ເລກໂທຣະສັບ |
|---|---|---|
| ທ່ານຫມໍ | | |
| ຜູ້ຊ່ຽວຊານ | | |
| ຜູ້ຊ່ຽວຊານ | | |
| ຜູ້ຊ່ຽວຊານ | | |
| ຮ້ານຂາຍຢາ | | |
| ຮ້ານຂາຍຢາ | | |
| ໂຮງພະຍາບານ | | |
| ຜູ້ໃຫ້ຄໍາປຶກສາ | | |

Washington State Health Care Authority

P.O. Box 42719
Olympia, WA 98504-2719

HCA 19-046 LA (12/24) Laotian